# ປະຫວັດ, ເມືອງສິງທ໌

ດ້ວຍ ຄວາມພິຄາະ ຂອງ

ຂຶງຄຳ ສູວັມັະນໍຣາຊ ທີ່

ຊຶງຈຳ ປະວັດ ຂອງຊຽງແຂວງ

ຕໍ່ໃສ່ ເມືອງສິງ, ເປັນສອງຄັ້ງ. ຈຶ່ງໃດ້ວິສາຊນາ ປະດິດຄິດຄູ້ນ ເອົາເຂົ້າໃສ່ກັນ ໃຫ້ເປັນຫົວດຽວເພື່ອໃຫ້ ຄົນເຮົາພວກ ຕໍ່ໄປໃດ້ຮູ້ແຈ້ງ ໃນເຣື່ອງປະວັດນີ້ເຂົ້າໃຈ ໃດ້ງ່າຍ ເພື່ອບໍ່ໃດ້ຊອກຫາ ຫຼາຍຕອນ ເພາະແຕ່ກ່ອນ ປະຫວັດຊຽງແຂວງຫາກຕອນນຶ່ງ ປະຫວັດເມືອງສິງຄັງທີນຶ່ງ ຫາກຕອນນຶ່ງ ປະຫວັດ ເມືອງສິງຄັ້ງທີສອງຫາກຕອນນຶ່ງຫາຜູ້ຈະຮູ້ ປະຫວັດທັງໝົດນີ້ໃດ້ຍາກ.

## ສາລະບາລະແຈ້ງຫົວຂໍ້


| | |
|---|---|
| ເຈົ້າອິນ້ປັນໃດ້ຊື່ເປັນເຈົ້າຟ້າເຫຼັກນ້ອຍ, ຫນ້າຕົ້ນ | ຫນ້າ |
| ເຈົ້າຟ້າເດັກນ້ອຍ | ໕ |
| ເຈົ້າສະແຫວນຫນີຟ້າ ເສັງບຸນຂອງລູກ | |
| ພຣະຍານາກເອົາຫອກທອງແດງ ມາຄ່າສົມພານ | ໕ |
| ໃກ່ອັ້ນ | ໖ |
| ເຫັນຜາຮູປເສືອ | ໖ |
| ເຫັນເງືາ ແສງຕໍ່ ຢູ່ໃນນ້ຳ | ໖ |
| ໃດ້ແສງຕໍ່ ແສງຕາວັນ | ໖ |
| ຕັ້ງບ້ານແປກ ບ້ານມຊຸກະ | ໖ |
| ຕັ້ງເມືອງຟັນ | ໖ |
| ຕັ້ງຢູ່ຊຽງແຂງ | ໗ |
| ໃດ້ນາງທຽມກົ້ມ ມາເປັນນາງເຈົ້າຟ້າເຫຼັກນ້ອຍ | ໗ |
| ພຣະຍາມີໂນ ພໍ່ຂອງນາງ | ໗ |
| ຄືນໃຊ້ພົບກັນ | ໗ |
| ສ້າງບ້ານເມືອງຊຽງແຂງ | ໘ |
| ຫໍຖາມປັນຫາ ພໍ່ເຈົ້າຟ້າເດັກນ້ອຍ | ໘-໙ |
| ເຈົ້າຟ້າເຫຼັກນ້ອຍແກ້ປັນຫາ ມີ ຢ່າງ | ໙ |
| ເຈົ້າຟ້າເຫຼັກນ້ອຍໃດ້ບຸດ | ໑໐ |
| ຣາຊການເຈົ້າອ້າຍຫນໍ່ເມືອງ | ໑໐ |
| ຣາຊການເຈົ້າສຸດອົກ | ໑໐ |
| ລູກເຈົ້າສູຣິນທາ ຜີ ຄືນ | ໑໐ |
| ເຈົ້າສູຣິນທາ ໄປນັ່ງເມືອງຊຽງແສນ | ໑໐ |
| ເຈົ້າຍອດໃຈແພງ ເປັນເຈົ້າຟ້າຊຽງແຂງ | ໑໐ |

ຫນ້າ


ພຍາຊາຍ ນັ່ງຊຽງແຂງ ໑໑

ພຍາແສນນ້ຍ ແລະ ພຍາແສນພົງ ຜິດເຈົ້າ ໑໑

ເຈົ້າອິນແປງ ເປັນເຈົ້າຟ້າຊຽງແຂງ ໑໒

ມ່ານພະມ້າ ແຜ່ອິທິພົລ ໑໒

ເຈົ້າຟ້າຊຽງໄຫ່ມ ເຈົ້າຟ້າຊຽງຕູງ ແຕ່ງຄົນຕົນມານັ່ງຊຽງແຂງ ໑໒-໑໓

ເຈົ້າຫນໍ່ແກ້ວ ເປັນເຈົ້າຟ້າຊຽງແຂງ ຊື່ເຈົ້າຂະຕິຍະວົງ ໑໓

ພຍາເທັພະວົງມາຊຽງລາບ ຜິດກັບຊຽງແຂງ ໑໓

ຄົນເມືອງພົງ ລັກຍິງຊ້າງປ່າ ຕີນຊຽງແຂງ ໑໓

ໃຫພົງເອົາເງິນມາໃຊ້ຄ່າຍິ່ງຊ້າງປາ ໑໓

ທັງສອງຝ່າຍ ຊຽງແຂງ ແລະ ເມືອງພົງຣົບກັນ ໑໔

ເຈົ້າຂະຕິຍະວົງຍາ ມີບຸດ ໓ ຊາຍ ໑໔

ຂ່າວວ່າ ເມືອງກຸງສີອະຍຸທິຍາ ຈະແຜ່ອຳນາດມາທາງເຫນືອ ໑໔

ຕັ້ງເມືອງສິງຄັ້ງທີ່ ໑ ໑໕

ກຸງສີອະຍຸທິຍາ ແຜ່ອຳນາດຂຶ້ນມາກວາດເອົາຄົນໄປ ໑໕-໑໖

ຄົນເມືອງນ່ານຂຶ້ນມາຕັ້ງ ເມືອງ ພູຄາ ນ້ຳທາ ໑໖

ຕັ້ງເມືອງສິງຄັ້ງທີ ໒ ໑໖

ທ້າວຂູນ ຜູ້ນຳຫນ້າ ມາຕັ້ງເມືອງສິງ ໑໗

ຈັບ ພຍາຫຼວງໂຂຄຳ ແລະ ພາຫຼວງສົມບັດໄປຂ້າ ໑໘

ຕັ້ງວຽງຈອມສີ ໑໘-໑໙

ເຈົ້າຟ້າຫນໍ່ຄຳ ສີຣຫນໍ່ ສເດັດມາເມືອງສິງ ໒໐

ແຜ່ນທີ່ວຽງຈອມສີ ໑໙

ເຂົ້າຢູ່ວຽງໃຫມ່ ໒໐

ໃດ້ເລີກງານຍາມດີ ທີ່ຄຣາຊາພິເສດ ໒໐-໒໑

ເມືອງນ່ານ ເຊີນເຈົ້າຟ້າໄປປະຊຸມ ໃຫ້ເຂົ້າກັບກຸງສີອະຍຸທິຍາ ໒໑-໒໒

ອັງກິດມາຢາມ ເມືອງສິງ ຄັ້ງທີ ໑ ໒໒

ອັງກິດຖາມເຈົ້າຟ້າເມືອງສິງ ໑໑ ຂໍ້ ໒໒-໒໓

ໜ້າ

ອົງກິດ ມາປາມເມືອງສິງ ຄັ້ງທີ ๔ - ๔๔
ທວູນທອກະເຈົ້າມ່ານ ບອກເຈົ້າຟ້າ ເອົາດອກໄມ້ຄຳຖວາຍມ່ານ ๔๔
ໜັງສືທວູນທອກະບອກໃຫ້ເຈົ້າຟ້າໄປຮັບທີ່ຊຽງລາບ ๔๔
ເຈົ້າຟ້າໜີຈາກວັງ ທີ່ຄຳໄປພັກຢູ່ຫົວຕູຍ ๔๕
ທວູນທອກະ ຄອກ ຈັບທ້າວຂູນອົງຄູດ ๔๕
ອົງກິດຂົນາບ ເອົາເງິນ ໖ ພັນແຖບ ๔๕
ພຣາທີພະຊ່າງ ໄດ້ໃສ່ເງິນໃຫ້ອົງກິດ ໖ ພັນແຖບ ๔๕
ເມືອງສິງໄດ້ຂຶ້ນກັບຝຣັ່ງເສັສ ๔๖
ເຖິງປີ ຈ.ກ. ໑๔๖๖ ເຈົ້າຟ້າສີຣໜໍ່ປາຈັງກູລ ສວັນະໂຄຕ. ๔๖-๔๗
ຣາຊການ ເຈົ້າຟ້າອົງຄຳ ๔๗
ຈັດຕັ້ງຣະບຽບ ກິນເງິນເດືອນ ແລະ ເກັບເງິນສ່ວຍຕົວເລກ ๔๗-๔๘
ອຸປະຣາຊ ໝ່ອນທີພະມະນີຄຳ ໜີຈາກເມືອງສິງ ๔๘-๔๙
ພຣາໝວງຄຳລື ໜີອອກ ເມືອງສິງ ๖໐
ຜູ້ຣາຍລອບຂ້າເຈົ້າຟ້າອົງຄຳ ๖໐
ຜູ້ຣາຍ ເຂົ້າຕີເມືອງສິງ ເສິກພຣາໝວງຄຳລື ๖໑-๖໑
ເຈົ້າຟ້າອົງຄຳ ໜີຈາກເມືອງສິງ ๖໑
ເຈົ້າຟ້າຄ່ຽດໃຫ້ຟັ່ງ ໄດ້ຟັງຄວາມເຈົ້າໝວງແສນ ๖໑-๖๔
ເຈົ້າທີ່ຢູ່ຊຽງຮູ້ງ ເຊີນເຈົ້າຟ້າ ຂຶ້ນໄປຊຽງຮູ້ງ ๖๔
ເຈົ້າຟ້າໄປຢູ່ຊຽງຮູ້ງ ๖๔-๖๖
ຣາຊການ ສິງຄືນໄປເປັນເຈົ້າເມືອງສິງ ๖๖
ເມືອງສິງຖືກແນວລາວຮັກຊາດ ຍຶດກະເອົາ ๖๔
ຕັ້ງແຂວງ ຕັ້ງເມືອງ ອົພະຍົບ ຢູ່ທີ່ເມືອງຫວ້ຍຊາຍ ๖๕

## ປະຫວັດ ເມືອງຊຽງແຂງ ຕໍ່ໃສ່ເມືອງສິງ

ຈະກ່າວປະຫວັດ ເຈົ້າຟ້າຊຽງແຂງ ທີ່ມາຈາກຊຽງຮຸ້ງ ແຕ່ກ່ອນເມືອງ ຊຽງຮຸ່ງ ຊື່ເມືອງອາຣະວີ ເຈົ້າເມືອງນີ້ມີນາມວ່າ ສະແຫວນຫມື່ນຟ້າ ດ້ວຍວ່າພໍ່ ຂອງເຈົ້າອົງຄົນ ເທາະເທີນໄດ້ ແລະ ໄດ້ໄປລົມພຣະອິນ ນຳເຈົ້າຟ້າວ້ອງຂອງ ຈີນ ແລະ ເຈົ້າຄະສັດມ່ານເມື່ອທັງ ມີ ຄະສັດໄປເຖິງພຣະອິນ ສາບຄາວຊຸ້ນ ແລະ ຖາມຄະສັດໃດກໍກ່າວວ່າຕົນບໍ່ໄດ້ກິນຊຸ້ນ ຈຶ່ງບອກໃຫ້ກັນຮາກ ພໍ່ຂອງເຈົ້າໄດ້ ຮາກອອກ ເປັນຊຸ້ນງົວເພາະວ່າກ່ອນຈະຂຶ້ນໄປເຝົ້າ ພຍາອິນນຳຫມູ່ ໄດ້ເຫັນງົວ ແລະ ກ່າວ່າຊຸ້ນງົວຕົວນີ້ ກຳລັງຈະເຊບໍ່ ເວົ້າເທົ່ານັ້ນ ກໍໄດ້ຮາກເປັນຊຸ້ນງົວ ອອກມາ ກໍເລີຍລັກຫນີຈາກຟ້າລົງ ມາກ່ອນຫມູ່ ຈຶ່ງໄດ້ຊື່ເຈົ້າ ສະຫມື່ນຟ້າ ຈຶ່ງມີຊື່ ລູກວ່າ ເຈົ້າສະແຫວນຫມື່ນຟ້າ ເຈົ້າອົງນີ້ມີລູກນຶ່ງຄົນຊື່ວ່າ <u>ເຈົ້າອິນປັນ</u> ເຈົ້າອົງນີ້ ມີພຣາປັນຍາ ຫຼັກແຫຼມຮູ້ຈັກຖາມ ແລະ ແກ້ປັນຫາຕ່າງໆ ເຈົ້າມີນິໃສມັກເພີນຟູງ ຈຶ່ງຂໍໃຫ້ພໍ່ເອົາເດັກຊາວເມືອງ ມາ[illegible]ເປັນຫມູ່ຄູ່ ເປັນນາກຫຼາຍ ພາກັນເຫຼັ້ນ ຢູ່ຕາມໃນວັງ ນອກວັງ ຕາມນອກບ້ານ ເປັນຫມູ່ໃຫຍ່ຫຼາຍຮ້ອຍຄົນເດັກທັງຫຼາຍ ຮູ້ ເຫັນເຈົ້າມີພຣາປັນຍາ ຫຼັກແຫຼມມັກຖາມ ແລະ ແກ້ປັນຫາໃຫ້ເດັກທັງຫຼາຍຟັງ ເດັກທັງຫຼາຍພ້ອມກັນ ຕັ້ງໃຫ້ເຈົ້າອົງນັ້ນເປັນເຈົ້າຟ້າແຫ່ງເຂົາ ແລະ ເອົາກັນ ເຫຼັ້ນນຳກັນທຸກໆວັນ ຫຼາຍວັນໃປ ເດັກບໍ່ໄດ້ຮັບຫໍ່ເຂົ້າຈາກພໍ່ແມ່ພຽງພໍ ກໍພາກັນ ຂ້າເອົາງົວຄວາຍຢູ່ຕາມທົ່ງນາມາກິນກັນ ກ່າວວ່າສຣອງໃຊເຈົ້າຟ້າ ຄົນທັງຫຼາຍ ຮູ້ເຫັນການເດັກນ້ອຍດັ່ງນັ້ນ ຜູ້ຄົນທັງຫຼາຍຈຶ່ງຮຽກວ່າ ເຈົ້າຟ້າເຫຼັກນ້ອຍ ຄົນທັງຫຼາຍ ທີ່ ປະຫມາດກໍຮຽກວ່າເຈົ້າຟ້າຫົວລອກ ຄົນທັງຫຼາຍບ້ານເມືອງ ໄດ້ເຫັນການປະ ພຶດຂອງເດັກເຫຼັກນ້ອຍທັງຫຼາຍ ຂ້າກິນງົວຄວາຍດັ່ງນັ້ນ ກໍພາກັບຕິຕຽນນຽນທາ ກ່າວອ້າງວ່າ ຈະເປັນການຈິບ ຫາຍ ຂອງບ້ານເມືອງ ພວກເຈົ້າຂອງສັດ ຈຶ່ງພາ ກັນເອົາຄວາມຂຶ້ນໄຫວ້ ກ່າວຟ້ອງຕໍ່ທ້າວອູນ ທ້າວອູນກໍມີຄວາມເຫັນໄປຕາມໆກັນ ກັບບ້ານເມືອງ ຈຶ່ງພ້ອມເປັນອັນນຶ່ງອັນດຽວກັນ ພາກັນຂຶ້ນໄຫວ້ເຖິງເຈົ້າຟ້າ ເລົ່າ ເຫັຕການເຣື່ອງ ເຫຼັກທັງຫຼາຍຫມູ່ເຫຼັ້ນກັບລູກເຈົ້າຟ້າຊາຍ ແລະ ທູນຖາມເຈົ້າຟ້າ ວ່າ ເຈົ້າຟ້າຈະເອົາບ້ານເມືອງໄວ້ ຫຼື ຈະເອົາລູກໄວ້ ເມື່ອເຈົ້າຟ້າຊາບດັ່ງນັ້ນ ກໍມີຄວາມສະອຶກແຄ້ນແນນໃຈທີ່ສຸດທາງທີ່ຕົກລົງໃຈໄດ້ <u>ກໍມີແຕ່ເສັງບຸນຄຸນຂອງລູກ</u> ຈຶ່ງສັ່ງໃຫ້ແຕ່ງແປງແພໃຫຍ່ [illegible] ນຶ່ງມອນ ແລະ ກົງກາງຈອງຄົນ

ຫມູ່ຄຳ ໄວ້ທາງບຸນ ໑ ດວງເອົາເຄື່ອງ ມຸ້ງນອນຫມອນມຸ້ງ ເຂົ້ານ້ຳໂພຊົນະອາຫານ
ພ້ອມທັງບ່າວຊາຍ ບ່າວໃຫ ໕ ຄູ່ ບ້າວຂ້າ ໓ ຄູ່ ໃສ່ໃນແພນຳເຈົ້າຟ້າເດັກນ້ອຍແລ້ວ
ພໍ່ແມ່ໃຫ້ລາບພອມແກລູກຂອງຕົນ ແລ້ວອະທິຖານວ່າ ຂໍໃຫ້ເຈົ້າຈຶ່ງໄດ້ເປັນສຸກພາຍ
ຫນ້າເທີ້ນ ແລ້ວຈຶ່ງໄດ້ສົ່ງແພໃຫຍ່ນ້ຳແມ່ຂອງລົງມາ ຈາກຊຽງຮຸ້ງໃຫຼລ່ອງລົງມາເຖິງ
ສີບັ້ນນ້ຳວະທີ່ຫາຍເມືອງຣຳ ມີພຣານາກໄດ້ເອົາຫອກທອງແດງ ມາຄ້ຳແພໄວ້ ເພື່ອຄ້ຳ
ສົມພານເຈົ້າຄົນແພບໍ່ໃຫຼ ພວກບ່າວຊາຍກໍພາກັນ ມຸດດຳລົງນ້ຳລົງເບິ່ງເຫັນຫອກກໍພາ
ກັນປົດເອົາຫອກ ເມື່ອໄດ້ຫອກແລ້ວ ເຈົ້າກໍເວົ້າວ່າຖານະທີ່ນີ້ ຄວນຕັ້ງບ້ານ ຊື່ວ່າ
ບ້ານເຫຼັກ ເທົ່າທຸກວັນນີ້ ລ່ອງຈາກນັ້ນມາເຖິງແຫ່ງນຶ່ງ ໃກ້ທີ່ພໍ່ແມ່ເອົາໃສ່ໃນແພໃຫ້
ນັ້ນ ຂົ້ນຂອນ ເຈົ້າກໍເວົ້າວ່າ ຖານະທີ່ນີ້ ຄວນຕັ້ງບ້ານຕັ້ງເມືອງ ເຈົ້າຈຶ່ງສັ່ງໃຫ້ບ່າວ
ໃຫ ໑ ຄູ່ມາຕັ້ງຢູ່ເຂດນັ້ນ ໄດ້ຊື່ເມືອງຂົ້ນ ເທົ່າທຸກວັນນີ້ຄົນລ່ອງລົງມາເຖິງແຫ່ງນຶ່ງ
ເຫັນພາຮູບເສືອ ແມນລົ້ນອອກຖໍ້ໃສ່ແປວນ້ຳ ມີສຽງດັງ ດັ່ງຟ້າຄາງ ທັງມີເສືອເຜືອກ
ຟານພອນດີ ເສືອດອນຟານດອນ ໃສ່ກັນເຂົ້າອອກ ຮູພາຢູ່ທີ່ນັ້ນ ກາຍນັ້ນມານ້ອຍນຶ່ງ
ໄດ້ເຫັນແວວຣັສະຫມີ ແສງຢູ່ໃນຮັງຖໍ້ ຢູ່ເທິງປາຍໄມ້ສອງເຂົ້າໄປໃນນ້ຳ ບ່າວຊາຍ
ທັງຫຼາຍເຫັນ ກໍໃສ່ໃຈວ່າ ຂອງນັ້ນ ... ຈຶ່ງພາກັນ ດຳມຸດນ້ຳລົງໄປເອົາ ມຸດເທົ່າ
ໃດກໍບໍ່ເຫັນ ຈົນຫນາວລະດ້າງແລະ...ຕາຍຕາກແດດຢູ່ເທິງແພ ຈຶ່ງເຫັນວ່າຣັສະຫມີ
ອອກມາຈາກຮັງຕໍ່ຢູ່ເທິງປາຍໄມ້ ຈຶ່ງພາກັນຂຶ້ນເອົາ ແມ່ຕໍ່ໄດ້ຕັດບ່າວຊາຍທັງຫຼາຍ ຜູ້
ໃດກໍເຈັບໂປດແລະຫວ້ານບໍ່ຢາກຂຶ້ນ ເຈົ້າຈຶ່ງເວົ້າວ່າຫາກຜູ້ໃດຂຶ້ນເອົາໄດ້ມາ ເຮົາຈະ
ແບ່ງປັນໃຫ້ ຈຶ່ງມີບ່າວຂ້າພວກອິດທົນຕໍ່ຕັດນັ້ນ ຂຶ້ນເອົາລົງມາໄດ້ ເມື່ອໄດ້ແສງນັ້ນມາ
ສັງເກັດແລ້ວ ມີຮູບດັ່ງຕາວັນ ດວງພະທິດ ມີຣັສະຫມີແປກປູາດ ຈຶ່ງຮຽກວ່າແສງຕາ
ວັນເຈົ້າກໍແບ່ງ ເອົາມອນໃນໃຫ້ບ່າວຂ້າ ເຈົ້າເອົາຂອບທາງນອກ ແລະເວົ້າວ່າໃຫ້
ຮັກສາໄວ້ເປັນແກ້ວແສງຮອມກັນ ແລ້ວສັ່ງໃຫ້ບ່າວຂ້າ ມາຕັ້ງບ້ານຢູ່ທີ່ນັ້ນ ໄດ້ຊື່ວ່າ
ບ້ານແປກບ້ານນອກ ເທົ່າທຸກວັນນີ້ ຄົນລ່ອງກາຍນັ້ນໄປ ນອນກາງຄືນ ຝັນເຫວະ
ດາມາບອກວ່າ ທີ່ຢູ່ເຈົ້າໄດ້ລ່ວງກາຍມາແລ້ວ ທີ່ຢູ່ເຈົ້າແມ່ນທີ່ ເສືອເຜືອກ ຟານພອນ
ໃສ່ກັນເຂົ້າຮູອອກຮູຢູ່ນັ້ນ ເຈົ້າຈຶ່ງໄປຕັ້ງຢູ່ທີ່ນັ້ນເທີ້ນ ຕື່ນແຈ້ງມາ ເຈົ້າຈຶ່ງບອກເລົ່າ
ຄວາມຝັນນັ້ນ ໃຫ້ບ່າວຊາຍຟັງ ແລະສັ່ງໃຫ້ບ່າວໃຫໄປຕັ້ງຢູ່ທີ່ນັ້ນ ຮຽກຊື່ວ່າເມືອງ
ຝັນເຫົ້າວັນນີ້ ເມື່ອເຈົ້າຮູ້ຄວາມຝັນດັ່ງນັ້ນເຈົ້າຈຶ່ງອະທິຖານວ່າ ຄົນຂ້າຄວນຕັ້ງຢູ່ທີ່
ຕາມຄວາມຝັນແລ້ວຂໍໃຫ້ແພຂອງຂ້ານີ້ ໃຫຼຄືນໄປສູ່ທີ່ນັ້ນເທີ້ນ ຕາມຄວາມອະທິຖານ

ຕາມຄວາມອະທິຖານຂອງເຈົ້າ ແພກໍໄຫຼລື່ນໄປຈອດເຖິງທີ່ນັ້ນ ຈຶ່ງໄດ້ມີງອນຫີນຕາມ
ແຄມນ້ຳຂອງ ຈ້າຍເມີງຂີ້ນຂອງ ແຕ່ເມືອງຟົນເຖິງຊຽງແຂງ.

ເຈົ້າ ຟ້າເຫຼັກນ້ຍ ໄດ້ພາເອົາບ່າວຊາຍ ຕັ້ງຢູ່ ແລະ ອູປເລົ່າບ່າວຊາຍທັງ
ຫຼາຍວ່າ ເຮົາບໍ່ມີຄົນຫຼາຍ ໄດ້ມາຕັ້ງບ້ານວຽງຕັ້ງຊຽງຢູ່ທີ່ນີ້ ໃຫ້ພາກັນແຂງໃຈເອົາ
ເມືອ ຈຶ່ງໄດ້ຊື່[illegible]ຊຽງແຂງ ເພື່ອອົ່ນເທົ່າທູກວັນນີ້ ເມື່ອຕັ້ງຢູ່ທີ່ນັ້ນ ບໍ່ນານປານໃດ
ພວກບ່າວຊາຍພາກັນໄປ ທ່ຽວຕາມປ່າ ຈຶ່ງໄດ້ໄປເຫັນນາງສາວຜູ້ນຶ່ງ ນັ່ງຢູ່ທັ່ງໜ້າ
ຜາສູງໆ ເຂົາຈຶ່ງພາກັນລອບເຂົ້າໄປເບິ່ງດູ ເຫັນຮູບສົມນົມພົນ ຂອງນາງງາມດັ່ງນາງ
ຟ້າເທພະຍຸດາ ເຂົາຈຶ່ງຊຸບກັນວ່າເຮົາເອົານາງນີ້ໄປເປັນເມັຍເຈົ້າຂອງເຮົາເທາະ
ເມື່ອເຂົ້າໄປນັ່ງບໍ່ທັນໄດ້ເວົ້າຫຍັງກັບນາງໆ ເລີຍລຸກແລ່ນໜີ ພວກບ່າວຊາຍກໍໄລ່
ຕາມຄົນນາງແລ່ນໄປເຖິງ ແຄມຫ້ວຍແຫ່ງນຶ່ງ ນາງກໍຕີກວິນຂ້າມ ຫ້ວຍໄປ ຈຶ່ງຊື່ຫ້ວຍ
ວິນເທົ່າວັນນີ້ ເມື່ອນາງໄປເຖິງຫ້ວຍອີກແຫ່ງນຶ່ງບ່າວຊາຍໄປທັນ ກໍລູຍາດຈັບເອົາ.
ນາງທີ່ນັ້ນ ຈຶ່ງຊື່ຫ້ວຍລູເທົ່າວັນນີ້ ໜ້າຜາທີ່ນາງນັ່ງໄດ້ຊື່ວ່າຜານາງ ຄັນຈັບໄດ້ນາງ
ແລ້ວບ່າວຊາຍກໍນຳເອົານາງໄປຖວາຍເຈົ້າແຫ່ງເຂົາ ເຈົ້າໄດ້ເຫັນນາງກໍຊອບ ນາງ
ເຫັນເຈົ້າກໍມີຄວາມພໍໃຈ ທັງສອງເຫັນກັນກໍມີຄວາມສະເນຫາຮັກ ມັກກັນ ກໍດ້ວຍອາສະ
ນາບຸນກັນ ມີນຳກັນມາແຕ່ພາຍຫຼັງເຈົ້າກໍໄດ້ປະຕິສັນຖານນາມ ທັງພໍ່ ແລະ ແມ່ທີ່ຢູ່
ນາງຈຶ່ງຕອບວ່າ ຂ້ຍຊື່ວ່າຫຍມີກົ້ນ ນາງມີຮູບປັກປິ່ນຄຳ ເປັນຮູບຫຍ່ ມີກົ້ນ ປະກົດ
ຢູ່ເທິງຫົວ ຈຶ່ງຊື່ນາງຫຍ ມີ ກົ້ນ ພໍ່ຊື່ພຍາມິໂມ ຢູ່ບໍ່ເຫຼັກບໍ່ຊາງນາງແລະເຈົ້າກໍໄດ້
ສົມສູ່ຢູ່ກິນດ້ວຍກັນ ເຈົ້າຈຶ່ງແຕ່ງໃຫ້ບ່າວຊາຍ ໄປຊອກຫາບ້ານເມືອງ ແລະ ພໍ່ແມ່
ຂອງນາງ ເພື່ອບອກເລົ່າອາການ ແລະ ຂໍອານຸຍາດ ໃຫ້ນາງໄດ້ຢູ່ກິນນຳເຈົ້າ
ບ່າວຊາຍກໍຮັບປະຕິບັດ ເອົາກັນອອກນຳໄປຕາມສາຍທາງທີ່ນາງແລ່ນໄປຄາວນັ້ນ
ສ່ວນພໍ່ແມ່ບໍ່ເຫັນນາງກັບຄືນບ້ານ ກໍໄດ້ແຕ່ງຄົນນຳຊອກຫາລູກສາວຂອງຕົນ ຕາມທີ່
ເຂັດນາງເຄີຍໄປ ໃຫ້ໄດ້ລູກສາວຄືນແທ້ ຄົນໃຊ້ກໍອອກຕາມຊອກຫານາງ ຄົນໃຊ້ທັງ
ສອງຝ່າຍກໍໄດ້ໄປພົບເຫັນກັນໃນປ່າ ກໍໄດ້ຖ້ອງຖາມ ແລະ ອູປເລົ່າຕາມເຣື່ອງຂອງ
ໃຜລາວໃຫ້ກັນຊາບ ເມື່ອເຂົ້າໃຈຄວາມກັນແລ້ວຕ່າງຝ່າຍກໍຕ່າງຮ້ອງຂໍ ໃຫ້ນຳກັນ
ໄປເຖິງທີ່ຈຸດໝາຍ ທີ່ນາງໄດ້ສັ່ງໄວ້ທີ່ສຸດກໍໄດ້ຍອມຄວາມຄົນໃຊ້ຝ່າຍຂອງພໍ່ນາງ ຈຶ່ງ
ໄດ້ພາເອົາກັນຄືນໄປຫາເຈົ້າ ຄັນຄົນໃຊ້ຂອງພຍາມິໂມ ໄດ້ເຫັນນາງ ແລະ ເຈົ້າຢູ່
ກິນນຳກັນແລ້ວ ກໍຍິນດີ ແຕ່ວ່າໄດ້ປະຕິບັດຕາມຄຳສັ່ງຂອງພໍ່ ຈຶ່ງຂໍເອົານາງຄືນໄປຫາ

ພໍ່ເສັຽກ່ອນ <u>ນາງຈຶ່ງຖາມເຈົ້າວ່າ</u> ເຈົ້າຈະວາງປ່ອຍໃຫ້ຂ້ອຍຄືນໄປຫາພໍ່ ຫຼື ເຈົ້າຕອບ ວ່າ ຫາກນາງບໍ່ຮັກກູພີ່ແລ້ວຈະກັບຄືນໄປຫາພໍ່ ກູພີ່ກໍບໍ່ຊາງຈະເວົ້າຢ່າງໃດ ຄັນນາງຮັກ ກູພີ່ຢູ່ນຳພີ່ ກູພີ່ຈະພານາງໄປສູ່ຂໍ ນຳພໍ່ແມ່ຂອງນາງຕາມຮີດຄອງຂອງໂລກ ຄັນນາງ ໄດ້ຊາບດັ່ງນັ້ນແລ້ວ ກໍຕາມຄຳເຈົ້າກ່າວຈຶ່ງສັ່ງໃຫ້ຄົນໃຊ້ຄືນໄປຫາພໍ່ ຂໍຕໍ່ພໍ່ແມ່ວ່າ ຄົນ ໄປຫາພໍ່ແມ່ດັ່ງຄວາມເຈົ້າເວົ້າ ຄົນໃຊ້ຈຶ່ງຮັບເອົາຄວາມນາງ ຈະກັບຄືນໄປ ເຈົ້າຈຶ່ງສັ່ງ ຄົນໃຊ້ນັ້ນ ວ່າຂໍຄວາມອານຸຍາດນຳພໍ່ແມ່ດ້ວຍ ການທີ່ໄດ້ກະທຳຜິດດັ່ງນີ້ ກໍເພື່ອບ່າວຊາຍ ຈັນທນາເຮົາຈະພານາງ ໄປສູ່ຂໍພໍ່ແມ່ຕາມຮີດຄອງ ຄົນໃຊ້ກັບຄືນເຖິງແລ້ວ ຈຶ່ງເອົາ ຄວາມນາງ ແລະ ເຈົ້າເລົ່າເຫດການທັງຫມົດ ໃຫ້ພໍ່ຟັງ ເມື່ອພໍ່ແມ່ຊາບວ່າ ລູກຂອງ ຕົນໄດ້ເປັນເມັຽຂອງເຈົ້າຟ້າເດັກນ້ອຍ ດັ່ງນັ້ນກໍມີຄວາມຍິນດີ ພໍ່ແມ່ຈຶ່ງໄດ້ສົ່ງຄົນ ໄປຢູ່ ໃຊ້ເຈົ້າ ແລະ ລູກຂອງຕົນ ຢູ່ທີ່ຊຽງແຂວງ ພາຍຫຼັງມາເຈົ້າຈຶ່ງໄດ້ພາເອົານາງ ແລະ ບ່າວຊາຍໄປຫາພໍ່ ທຣາມີໂນ ທີ່ບໍ່ເຫຼັກບໍ່ຊາງພໍ່ແມ່ກໍໄດ້ ທຳມັງຄຣະອາວາຫະວິວາຫະ ໃຫ້ລູກທັງສອງໄດ້ເປັນຜົວເມັຽກັນຕາມຮີດຄອງໂລກ ພໍ່ແມ່ຈຶ່ງໄດ້ມອບ ເຄື່ອງຮັກສາ ແຫນແຫນ່ ດາບງ້າວເຫຼັກລອດ ໔ ດວງ ຫອກ ໔ ດວງນາດ ໔ ຄະນອກ ໖ ຊື່ ເລົາສິງ ເລົາເສືອ ໃຫ້ເຈົ້າ ຈັດເອົາບ່າວໄພ່ຄົນເມືອງ ແຫນແຫ່ເຈົ້າ ແລະ ນາງໄປເຖິງ ຊຽງແຂວງ.

<u>ຕອນສ້າງບ້ານເມືອງ ຊຽງແຂວງ</u>:

ເຈົ້າຟ້າເດັກນ້ອຍເຫຼັກນ້ອຍ ສັ່ງໃຫ້ຕັ້ງບ້ານຕັ້ງເມືອງເມື່ອມີຜູ້ຄົນ ມາກຫຼາຍຫຼັ່ງ ໄຫຼເຂົ້າມາ ເພິ່ງບາຣະມີ ເຈົ້າກໍສັ່ງໃຫ້ຕັ້ງບ້ານຕັ້ງເມືອງອີກຕໍ່ໄປ ບ້ານ ແລະ ເມືອງ ທີ່ຕັ້ງ ແລະ ຂຶ້ນກັບຊຽງແຂວງ ມີດີ ບ້ານເຫຼັກ ຖຣຸ ກອນເມາະ ກອນເລີຍ ເມືອງຖາມ ເມືອງງອນ ເມືອງນຳ ເມືອງແຮະ ເມືອງອັນ ມະໂຫຼຍໃຕ້ ໂຫຼຍເຫນືອ ເມືອງວະ ຊຽງຂາງ ຊຽງເຫນືອ ບ້ານແປກ ບນອກ ມະຟັນ ດອນໃຊ ເມືອງສະ ນຊາຍ ເມືອງ ບໍ່ ເມືອງຫຼວງພູຄາ.

ດິນຊຽງແຂວງມີອານາເຂັດ ກ້ວາງປະຫມານ ໖00 ກິໂລແມດ ຍາວ ໔00 ກິໂລ ແມດ, ທາງທິດໃຕ້ ຕິດກັບດິນລ້ານຊ້າງ ຫລວງພະບາງທິສໃຕ້ຫາວັນຕົກເຫນືອ ຕິດກັບ ດິນ (ມ່ານພະມ້າ) ເຈົ້າຟ້າເຫຼັກນ້ອຍ ເປັນເຈົ້າຟ້າຊຽງແຂວງ ບ້ານເມືອງຢູ່ສຸກຄະຕິ ຄະມະນະ

<u>ຫຼັງມາ ຖາມປັນຫາ ເຈົ້າຟ້າຊຽງຮຸ່ງ</u>

ເມື່ອຫຼັງຊາບວ່າ ເຈົ້າຟ້າຊຽງຮຸ່ງ ເນຣະເທັສ ເຈົ້າຟ້າເດັກນ້ອຍອົງຄ໌ເປັນຣາຊ

ໂອຣິສ ທີ່ມີຄວາມສລາດຫຼັກແຫຼມ ອອກຈາກແຜ່ນດິນແລ້ວກໍແຕ່ງປັນຫາມາທວາຍ ທັງສັນຍາວ່າ ຖ້າເຈົ້າຟ້າແກ້ບໍ່ໄດ້ ກໍ່ຈະເອົາບ້ານເມືອງ ແລະ ແຜ່ນດິນ ຄັນແກ້ໄດ້ ຈະເອົາມ້າຕ່າງແຜ່ນແພມາໃຫ້ ໕ ຮ້ອຍຕ່າງ ປັນຫາມີ ໓ ຢ່າງ: ໑. ນາງສອງຄົນຄືກັນ ໒. ມ້າ ໒ ຕົວຄືກັນ ໃຫ້ບອກວ່າຄົນໃດແມ່ນແມ່ຄົນໃດລູກມ້າຕົວໃດແມ່ຕົວໃດແມ່ນລູກ.

໓. ທ່ອນໄມ້ຈັນຄ່ຽນເຫຼົາເຄົ້າປາຍເທົ່າກັນໃຫ້ບອກຮູ້ວ່າທາງໃດເຄົ້າເມື່ອເຈົ້າຟ້າຊາຍກໍຮຽກເອົາເສນາອາມາສ ມາປະຊຸມປຶກສາເພື່ອຈະແກ້ປັນຫາ ພາຍໃນ ໑໕ ວັນຂ້າງໜ້າ ເສນາ ແລະ ປັນດິຕອາຈານ ຜູ້ໃດກໍບໍ່ສາມາຖແກ້ໄດ້ ນອກນີ້ຍັງປາວເທີນຊອກຫາຄົນບ້ານເມືອງ ຜູ້ຈະແກ້ກໍບໍ່ມີ ແຕ່ມີພວກທີ່ເຄີຍໄດ້ເປັນໝູ່ຄູ່ເຫຼັ້ນກັບເຈົ້າເຫຼັກນ້ອຍ ແຕ່ເກົ່ານັ້ນຫຼາຍຄົນກ່າວວ່າ ເຈົ້າຟ້າເຫຼັກນ້ອຍ ຄົງຈະແກ້ປັນຫານັ້ນໄດ້ດ້ວຍງ່າຍ ແລະ ມີຫຼາຍໆຄົນເວົ້າ ຄວາມນັ້ນລືຊາໄປທ້າວຂຸນຫຼາຍຄົນຮູ້ ກໍເອົາຄວາມນັ້ນ ຂຶ້ນໃຫ້ວເຈົ້າຟ້າ ຕາມຄວາມຄູ່ເຫຼັ້ນກັບເຈົ້າຟ້າເຫຼັກນ້ອຍຫຼາຍໆຄົນກ່າວ ເຈົ້າຈຶ່ງສັ່ງໃຫ້ແຕ່ງຕົນໃຊ້ໄປຫາຖາມເຈົ້າຟ້າເຫຼັກນ້ອຍ ມີອາຍຈອມໃຈເປັນຜູ້ໄປ ຄັນເຖິງເຈົ້າຟ້າເດັກນ້ອຍກໍໃຫ້ວໃຫ້ເຈົ້າຊາຍຕາມປັນຫາ ໓ ຢ່າງ ເຈົ້າຊາຍແລ້ວກໍເວົ້າໃຫ້ຄົນໃຊ້ ວ່າປັນຫານັ້ນແກ້ໄດ້ທຸກປະການ ແລະ ອ້າຍຈອມໃຈກໍເລີຍໃຫ້ວຂໍເຊີນເຈົ້າຟ້າເດັກນ້ອຍ ເມືອແກ້ປັນຫາ ເຈົ້າຟ້າເຫຼັກນ້ອຍກ່າວວ່າ ເຝີນການມັກງ່າຍ ບໍ່ຄວນກູຈະໄປໄດ້ ແລະ ອ້າຍຈອມໃຈຄົນໃຊ້ກໍຂາບລາ ຮີບກັບຄືນໄປໃຫວ້ ຖວາຍຂໍ້ການຕໍ່ເຈົ້າຟ້າຊຽງຮຸ່ງ ຄັນເຈົ້າຟ້າຫຼົງຊາບແລ້ວ ກໍແຕ່ງທ້າວຂຸນ ຫ້າງເອົາຊ້າງໃສ່ພວງຄຳ ມາເຊີນໃສ່ເອົາເຈົ້າຟ້າເດັກນ້ອຍເມືອຫາພໍ່ ຄັນເຖິງວັນກຳໜົດ ກໍນຳເອົາ ປັນຫາ ໓ ຢ່າງນັ້ນມາພ້ອມຊອງໜ້າກັນ ເມື່ອເຈົ້າຟ້າເຫຼັກນ້ອຍຈະແກ້ປັນຫາ:

ຂໍ້ທີ ໑. ເຈົ້າໃຫ້ແຕ່ງພາຊຸນະອາຫານມາ ໃຫ້ນາງທັງສອງພ້ອມກັນນັ່ງກິນ ຄັນນາງໃດກິນກ່ອນແມ່ນແມ່ ຜູ້ກິນລຸນແມ່ນລູກ (ທໍ້ກໍຮັບວ່າແມ່ນ)

໒. ເຈົ້າໃຫ້ເອົາມ້າທັງສອງຕົວໄປຜູກແຂວງແດດໃຫ້ຫິວນ້ຳຈຶ່ງເອົາພາຊຸນະໃສ່ໃສ່ນ້ຳມາວາງໄວ້ ເອົາມ້າທັງສອງຕົວເຂົ້າມາຈຸ້ມນ້ຳພ້ອມກັນ ຄັນຕົວໃດກິນກ່ອນ ຕົວນັ້ນແມ່ນລູກ ຕົວກິນລຸນແມ່ນແມ່ (ທໍ້ກໍຮັບວ່າແມ່ນ)

໓. ທ່ອນໄມ້ຈັນ ເຈົ້າແທກໃຫ້ຊື່ງໆ ເອົາໄໝເສັ້ນນ້ອຍໆ ຍາວຄ່າແຂນ ເຈົ້າເອົາເສັ້ນໄໝນັ້ນມັດຜູກທ່ອນໄມ້ຈັນ ບ່ອນດຶ່ງງໆນັ້ນຈຶ່ງເອົາອ່າງໃສ່ນ້ຳມາວາງໄວ້ ຈຶ່ງຫິ້ວເອົາເຊືອກຕອນໄມ້ຈັນຂຶ້ນ ວາງໃສ່ໜ້ານ້ຳໃນອ່າງ ບ່ອນເຊືອກລົງນ້ອຍນຶ່ງ ສົ້ນໃດຈົມສົ້ນນັ້ນແມ່ນທາງກົກ (ທໍ້ກໍຮັບວ່າແມ່ນ ຖືກຕ້ອງເຈົ້າຟ້າເຫຼັກນ້ອຍ ແກ້ປັນຫາໄດ້ຖືກຕ້ອງແລ້ວ ທໍ້ກໍຍົກເອົາແຜ່ນແພ ໕ ຮ້ອຍຕ່າງ ໃຫ້ເຈົ້າຟ້າຊຽງຮຸ້ງແລ້ວ ກໍກັບ

ຄືນໄປເມືອງທັ້ ຟ່າຍເຈົ້າຟ້າ ເພື່ອເປັນກ[illegible]ຖຸມະນາຄູນ ຂອງລູກຊາຍ ຈຶ່ງແບ່ງປັນດິນ ຊຽງຮຸ້ງ ອອກໃຫ້ເຈົ້າຟ້າເຫຼັກກັ້ນຍ໌ ມີຄື: [illegible]ເປັນເມືອງຫນາງ ເມືອງນາງ ເມືອງປ່ວນ ເມືອງນາງ ເມືອງພົງ ບໍ່ແຮ້ ມີ ຖຽງ ບໍ່ພວງ ມີ ຖຽງ ແລະ ແຜ່ນແພ ໒໔໐ ຕາງ ໃຫ້ລູກ ແຕ່ເຈົ້າບໍ່ມີໃຈຮັບເອົາບ້ານເມືອງເລົ່ານັ້ນ ເຈົ້າເທົ່າຮັບເອົາແຕ່ແຜ່ນແພເທົ່ານັ້ນ ແລ້ວກໍກາບລາພໍ່ ກັບຄືນມາສ້າງບ້ານເມືອງຊຽງແຂງຕໍ່ໄປ.

<u>ເຈົ້າຟ້າເຫຼັກກັ້ນຍ໌ມີທູຕອົງນຶ່ງຊື່</u> ເຈົ້າອ້າຍຫນໍ່ເມືອງ ຄັນພິພຣາມີໂນ ຊາບວ່າລູກສາວຂອງຕົນ ໃດ້ລູກເປັນຄົນເຂີຍ ແລະ ຫຼານຍັງໃດ້ນຳເອົາ ດາບຟັກຄຳ ໑໒ ດວງ ຟັກເງິນ ໒໔ ດວງ ດອກໄມ້ເງິນ ໔໙ ດອກໄມ້ຄຳ ໑໒ ດອກ ນຳໄປຖວາຍ ເຈົ້າຟ້າຊຽງຮຸ້ງ ແລະ ເຈົ້າລ້ານນາຊຽງໃຫມ່ ຟ່າຍ ແລະ ເທົ່າກັນ ເພື່ອສັນໃຊຍໃນຕິຣກັນ ກັບເມືອງຊຽງແຂງ ເຈົ້າຟ້າເຫຼັກກັ້ນຍ໌ນອນແຮແລ້ວ.

<u>ແມ່ນຣາຊການ ເຈົ້າອ້າຍຫນໍ່ເມືອງໆ</u> ມີຣາຊບຸຕອົງນຶ່ງຊື່ ເຈົ້າສູດອົກ ເມື່ອພໍ່ສວັນນະໂຄດໄປແລ້ວ ກໍແມ່ນ.

<u>ຣາຊການເຈົ້າສູດອົກໆ ມີຣາຊບຸຕ</u>ສອງອົງ ຜູ້ກົກຊື່ເຈົ້າຄຳສຸກ ຜູ້ນ້ອງຊື່ເຈົ້າສູຣິນທາ ທັງສອງກໍມີຕະຊະອານຸພາບ ເຈົ້າຄຳສຸກໄປຣົບເອົາເມືອງຊຽງລາບ ຂຶ້ນກັບຊຽງແຂງ ແລະ ເປັນເຈົ້າຢູ່ເມືອງຊຽງລາບ ເມື່ອປີ ຈ.ກ. (                    ) ຄາວນັ້ນແມ່ນ ຣາຊການພະເມືອງແກ້ວ ສຣຫວີຍເມືອງຊຽງໃຫມ່.

<u>ຣາຊການພະ ເມືອງແກ້ວນັ້ນ ແລ້ວ</u> ເຫັນວ່າເມືອງລ້ານນາຊຽງໃຫມ່ ກັບຊຽງແຂງ ເປັນສາຍສົມພັນຕິຣມິຕກັນ ຈຶ່ງຕັ້ງໃຫ້ເຈົ້າ ສູຣິນທາ ບຸດຂອງເຈົ້າສູດອົກ ເຈົ້າຟ້າຊຽງແຂງ ໄປນັ່ງເມືອງຊຽງແສນ <u>ເຈົ້າສູຣິນທາ</u> ມີລູກຊາຍ ໖ ຄົນ.

໑. ເຈົ້າຍອດໃຈແພງ
໒. ທ້າວ ແສງສີ
໓. ຕອນຄຳແດງ
໔. ທ້າວອິນແປງ
໕. ຊູ້ນແພງ
໖. ທ້າວ ແພງ

ເມື່ອຣາຊການເຈົ້າສູດອົກ ສິ້ນສຸດໄປແລ້ວ ກໍແມ່ນ

ຣາຊການ ເຈົ້າຄຳສຸກ ຈະກ່າວເຖິງ <u>ເຈົ້າສູຣິນທາ</u> ບຸດຊາຍຜູ້ທີສອງຂອງເຈົ້າສູດອົກເມື່ອໄປນັ່ງເມືອງຊຽງແສນ ຢູ່ບໍ່ນານປານໃດ ເຈົ້າຄຳສຸກທີ່ເປັນເຈົ້າຟ້າຊຽງແຂງ ກໍສິ້ນ

ພະອູນໄປ ເຈົ້າຄຳສຸກບໍ່ມີບຸຕ ອັນຈະສືບສາຍເປັນເຈົ້າແທນເມືອງເສັຽແລ້ວ ທ້າວອູນຄືນເມືອງຊຽງແຂວງຈຶ່ງໄດ້ໄປເຊີນເອົາເຈົ້າສຸຣິນທາ ຄືນໄປເປັນເຈົ້າຟ້າຊຽງແຂວງ ເຈົ້າສຸຣິນທາ ຈຶ່ງໄປໄຫວ້ພະເມືອງແກ້ວ ຂໍຄືນໄປຊຽງແຂວງ ແຕ່ບໍ່ໄດ້ຮັບອານຸຍາດ ຄວາມເຫັນດີຂອງພະເມືອງແກ້ວ ແລະ ເຈົ້າຍອດໃຈແພງ ລູກຊາຍກົກ ຂອງເຈົ້າສຸຣິນທາ ໄປເປັນເຈົ້າເມືອງຊຽງແຂວງ ຈຶ່ງຕັ້ງໃຫ້ເຈົ້າຍອດໃຈແພງ.

ເຈົ້າຍອດໃຈແພງ ເປັນເຈົ້າຟ້າຊຽງແຂວງ. ໄດ້ນານວ່າເຈົ້າສອງເມືອງ ເຖິງປີ ຈ.ກ. (໑໐໙໗) ເຈົ້າສຸຣິນທາອົງຄ໌ ບິດາສວັນະໂຄຕແລ້ວ ເຈົ້າຍອດໃຈແພງ ຈຶ່ງຂໍເອົາແມ່ແລະນ້ອງທັງ ໕ ຄົນ ໄປຢູ່ນຳທີ່ຊຽງແຂວງ ແລະ ຕັ້ງໃຫ້ເຈົ້າຕອນຄຳແດງ ໄປນັ່ງເມືອງໂຫຼຍໃຕ້ ເຖິງປີ ຈ.ກ (          ) ເຈົ້າຍອດໃຈແພງ ຊຳແຕ່ງຕັ້ງໃຫ້ ເຈົ້າອິນແປງ ໄປນັ່ງເມືອງໂຫຼຍໃຕ້ຄືເມືອງຢູ້ ແທນຕ່ອນຄຳແດງ ໃຫ້ຕ່ອນຄຳແດງໄປນັ່ງເມືອງຊາຍ ໃຫ້ເຈົ້າບຸນແປງ ໄປນັ່ງຊຽງເໜືອຄືຊຽງຂາງໃຫ້ທ້າວບຸນແພງໄປນັ່ງ ເມືອງຫຼວງພູຄາທາກາດ.

- ເຈົ້າຍອດໃຈແພງ ໄດ້ຊື່ເພີ້ນວ່າເຈົ້າສອງເມືອງ ນັ່ງເມືອງຊຽງແຂວງເຖິງປີ ຈ.ກ (໑໑໐໔) ຕ່ອນຄຳແດງເຈົ້າເມືອງຊາຍ ກັບເຈົ້າສອງເມືອງ ຜິດກັນຣົບກັນ ເຈົ້າສອງເມືອງບໍ່ແພ້ນ້ອງຊາຍ ກໍເອົາລູກເມັຽ ໜີໄປເພິ່ງເຈົ້າຊຽງໃໝ່ ພຍາຊາຍກໍນັ່ງເມືອງຊຽງແຂວງ ປີຈ.ກ. ໑໑໐໕ ພຍາຊາຍໄດ້ສ້າງນຍກວຽງ ປັດເອົາພະລະກຳລັງໂຍທາ ສາມແສນຄົນຮັກສາເມືອງຊຽງແຂວງ ແລະ ແຕ່ງຕັ້ງ ທະຫານລັບ ທະຫານກ້າອອກໄປຕິດຕາມສືບເອົາຂ່າວ ບໍ່ໄດ້ຢຸດຢັ້ງ ເຈົ້າສອງເມືອງໄດ້ຂໍເອົາທະຫານ[illegible]ກັບເຈົ້າຟ້າຊຽງໃໝ່ ມາຣົບນ້ອງຊາຍ ລ້ອມເມືອງຊຽງແຂວງ ໓ ດ້ານ ແຕ່ກໍສູ້ນ້ອງຊາຍບໍ່ໄດ້ເສັຽຕາຍ ເຈົ້າ ໓ ລ້ານ ແມ່ທັບຫຼວງເຫັນເຈົ້າສອງເມືອງຕາຍແລ້ວກໍຖອຍທັບ ກັບຄືນໄປຊຽງໃໝ່ລ້ານນາ ພຍາຊາຍກໍແຕ່ງໃຫ້ເສນາອາມາດເອົາດອກໄມ້ເງິນດອກໄມ້ຄຳ ມ້າດາວເງິນ ດາວຄຳ ນຳໄປຂໍສົມມາຄາຣະວະ ເຈົ້າຟ້າຊຽງໃໝ່ ແລະ ຂໍເອົາເອື້ອຍໃພ້ຍ ເມັຽຂອງເຈົ້າສອງເມືອງ ມາເປັນເມັຽຄືນຢູ່ຊຽງແຂວງ ໄດ້ລູກ ໓ ຄົນຜູ້ກົກຊື່ທ້າວຫົ່ນແກ້ວ ຜູ້ກາງຊື່ອ້ານນາງຄຳແດງໄປເປັນນາງເທວີ ຊຽງຕຸງ ຜູ້ປາຍຊື່ທ້າວຫົ່ນຄຳ ພຍາຊາຍເປັນເຈົ້າເມືອງຊຽງແຂວງ ເຖິງປີ ຈ.ສ (໑໑໑໐) ພຍາແສນນ້ອຍຜິດກັນກັບເຈົ້າຟ້າຊຽງໃໝ່ເຈົ້າຟ້າມັງຫາເອົາຂີ້ພິລໃສ່ຈັບບໍ່ກັນເພາະພຍາແສນນ້ອຍໜີມາເພິ່ງເຈົ້າເມືອງຊຽງແຂວງ ແລະ ພຍາແສນພົງ ກໍຜິດກັບເຈົ້າແຜ່ນດິນຊຽງຮຸ້ງ ກໍໂຕນໜີມາເພິ່ງເຈົ້າເມືອງຊຽງແຂວງ ເຈົ້າເມືອງຊຽງແຂວງນີ້ ຢາກໄດ້ຄວາມດີ ຄວາມຊອບ ກໍຈັບເອົາພຍາແສນນ້ອຍ ແລະ ພຍາແສນພົງ ຜູ້ໜີຮ້ອນມາ

ເພິ່ງເປັນ ໄປຖວາຍເຈົ້າຟ້າຊຽງໃໝ່ ແລະ ຊຽງຮຸ້ງ ເຈົ້າຟ້າທັງສອງມີຄວາມດີໃຈ ຈຶ່ງປະທານ ເຄື່ອງທ້າວ ໕ ປະການເຄື່ອງກິນຕຣີ ແລະ ເຈົ້າຟ້າຊຽງຮຸ້ງ ກໍແບ່ງ ເຂດນ້ຳແດນດິນ ຄື: ເມືອງພົງ ເມືອງມາງ ໃຫ້ເຈົ້າເມືອງຊຽງແຂງ ແຕ່ວ່າທັງ ເມືອງທັງສອງ ບໍ່ຍອມຂຶ້ນກັບຊຽງແຂງ ເພາະເສັຽໃຈທີ່ຈັບພຽາແສນພົງສົ່ງໃຫ້ເຈົ້າ ຟ້າຊຽງຮຸ່ງນັ້ນ ພຽາຊາຍເປັນເຈົ້າເມືອງຊຽງແຂງ ເຖິງປີຈ.ສ (໑໑໕໙) ຮວມໄດ້ (໑໗) ປີກໍເຖິງອະນິຈະກັມໄປແລ້ວຄັນຕ່ອມຄຳແດງພຽາຊາຍຕາຍແລ້ວ ພວກນ້ອງຈຶ່ງ ເອົາເຄື່ອງທ້າວ ໕ ປະການ ໄປສົ່ງຄືນເຈົ້າຟ້າຊຽງໃໝ່ ເຈົ້າຟ້າຊຽງໃໝ່ ຈຶ່ງຕັ້ງ ໃຫ້ ເຈົ້າອິນແປງ ຜູ້ນັ່ງເມືອງໂຫຼຍໄຕ້ ມາເປັນເຈົ້າຟ້າຊຽງແຂງແທ່ນພີ່ຊາຍໃນປີ ຈ.ສ (໑໑໖໘) ທັງມອບ ພຸທະຮູປແກ້ວ ຮູບຄຳ ຮູປທອງ ຮູປທາດພັນທຸ ແລະ ໜັງ ສືພັນທຸ ແລະ ພະສົງມາແຜ່ພາຍສາສນາອີກ ເມື່ອເຈົ້າຟ້າມາເຖິງຊຽງແຂງ ກໍໄດ້ສ້າງ ທາດ ໄວ້ທີ່ຊຽງແຂງຊື່ ເຈດີຍ: ອິນແຖຮງ ຕັ້ງໄວ້ດຽເຮືອຊຽງລາບ ພາຄຳ ເມືອງ ລອງ ດຽຍິນຍອງເມືອງກາງທາດຟ້ອນເມືອງສົ່ງ ບ້ານຮູ່ງເມືອງຍ່ວນ ທາດດຽທີ່ເມືອງ ແຣະ ສາລາຢູ່ຄຳເມືອງຍູ້ ແລະ ຕໍ່ໆໄປ ແລະ ໄດ້ສົ່ງເອີ້ຍໄພ້ເມັຽພຽາຊາຍ ພອມ ທັງຫຼານ ໓ ຄົນຄື ເຈົ້າໜໍ່ແກ້ວ ນາງຄຳແດງ ເຈົ້າໜໍ່ຄຳ ໄປຢູ່ເມືອງໂຫຼຍໄຕ້ຄື: ເມືອງຍູ້ ເຈົ້າອິນແປງ ຜູ້ນ້ອງເປັນເຈົ້າຟ້າຊຽງແຂງໄດ້ (໘ປີ) ແຕ່ປີ ຈ.ສ (໑໑໖໘) ເຖິງຈ.ສ (໑໘໑໕) ກໍສະຫວັນະໂຄດ.

## ມ່ານແຜ່ອິທິພົລ

ເມື່ອເຈົ້າອິນແປງສະຫວັນະໂຄດແລ້ວນັ້ນ ພວມມ່ານແຜ່ອຳນາດຂຶ້ນມາຄຸ້ມຄອງ ເຖິງດິນຊຽງແຂງ ທາງຝາກນ້ຳຂອງ ຝ່າຍຕາວັນຕົກໄວ້ທັງໝົດໃຫ້ຂຶ້ນກັບມ່ານ ໄພ່ ພົລະເມືອງທັງຫຼາຍບໍ່ພໍໃຈ ດ້ວຍວ່າສາຍທາງບ່ອນໃດສຳຄັນ ມ່ານໄດ້ຢູ່ອາຍ ຢູ່ຍາມ ມີຄົນຫຍວຣະໄວໄປມາມ່ານກໍກັບເງິນຄ່າອາຍ ທັງມັກຫາເຣື່ອງ ບາບໃໝ່ໃສ່ໂທສ ເອົາເງິນເອົາຄຳ ພວກຫຍວໄປມາຢູ່ເລື້ອງ ຄົນບ້ານຄົນເມືອງຊັງ ມ່ານກໍຢູ່ບໍ່ໄດ້ ຈຶ່ງກັບຄືນໄປໝົດ.

ຫຼັງຈາກເຈົ້າອິນແປງ ສວັນະໂຄຕໄປແລ້ວບໍ່ມີຜູ້ນັ່ງເມືອງຊຽງແຂງ.

ເຈົ້າຟ້າຊຽງໃໝ່ ແລະ ເຈົ້າຊຽງຕຸງ ກໍອ້າງວ່າໄດ້ເອົານາງຄຳແດງເປັນ ເມັຽ ໄດ້ເປັນຍາດເຂີຍຊຽງແຂງ ຈຶ່ງສົ່ງເຈົ້າຊຽງຕຸງ ແລະ ນາງເມືອງການມາເປັນ ເຈົ້າຟ້າຊຽງແຂງ ແຕ່ວ່າໄພ່ເມືອງບໍ່ພໍໃຈ ດ້ວຍວ່າບໍ່ແມ່ນເຊື້ອສາຍ ເຈົ້ານ້ຳແທ່ນ

ແຜ່ນດິນຊຽງແຂງແທ້ ໄພ່ເມືອງບໍ່ມັກບໍ່ພ້ອມເຈົ້າຊຽງຕຸງແລະນາງເມືອງກາ ມາເປັນເຈົ້າຊຽງແຂງ ຢູ່ບໍ່ໄດ້ນານເທົ່າໃດກໍໄດ້ຫນີກັບຄືນໄປຊຽງຕຸງ ຢູ່ຕໍ່ມາປີ ຈ.ສ(໑໘໑໗)

-<u>ເຈົ້າຟ້າຊຽງໃຫມ່ ກໍສົ່ງເຈົ້າຊຽງໃຫມ່ຊື່</u> ເອັກະມຸນຕີສີວິໄຊຍະສົງຄາມ ມາເປັນເຈົ້າຊຽງແຂງ ໄພ່ເມືອງກໍບໍ່ມັກບໍ່ພ້ອມ ຢູ່ເປັນເຈົ້າບໍ່ໄດ້ກັບຄືນໄປ ເຈົ້າຟ້າຊຽງໃຫມ່ຍັງໄດ້ສົ່ງເຈົ້າເມືອງເຂມະຣະທະມາເປັນເຈົ້າຟ້າ ຊຽງແຂງອີກ ໄພ່ເມືອງກໍບໍ່ມັກບໍ່ພ້ອມ ຢູ່ບໍ່ໄດ້ກໍກັບຄືນໄປດັ່ງເກົ່າ ການທີ່ຊຽງຕຸງ ຊຽງໃຫມ່ ສົ່ງຄົນມາເປັນເຈົ້າຊຽງແຂງນັ້ນ ຊຽງຕຸງກໍອ້າງວ່າ ໄດ້ເປັນເຊື້ອເຄືອກັບຊຽງແຂງ ຊຽງໃຫມ່ກໍອ້າງວ່າ ໄດ້ເປັນຜູ້ດູແລຊຽງແຂງມາແຕ່ນານ.

- ໃນທີ່ສຸດ ທ້າວຂຸນ ຄົນບ້ານເມືອງຕົກລົງພອມເປັນຄວາມດຽວກັນວ່າ ຄວນເອົາເຈົ້າເຊື້ອຊາຕສະມັນຕະຣາຊເຈົ້າຟ້າຊຽງແຂງ ມາເປັນເຈົ້າຊຽງແຂງຕໍ່ໄປ ເຊື້ອຊາຕກໍຍັງມີເຈົ້າຫນໍ່ແກ້ວເຈົ້າຫນໍ່ຄຳລູກຂອງພຽາຊາຍດັ່ງນັ້ນຈຶ່ງແຕ່ງ ທ້າວຂຸນໄປຂໍເຈົ້າຟ້າຊຽງໃຫມ່ ເອົາເຈົ້າຫນໍ່ແກ້ວມາເປັນເຈົ້າຊຽງແຂງ ເຈົ້າຟ້າຊຽງໃຫມເຫັນດີ ຈຶ່ງຕັ້ງໃຫ້<u>ເຈົ້າຫນໍ່ແກ້ວ ເປັນເຈົ້າ</u> ຊຽງແຂງ ໄດ້ພະນາມວ່າເຈົ້າຂຕິຍະຣາຊວົງສາ ເປັນເຈົ້າຟ້າຊຽງແຂງໃນປີ ຈ.ສ (໑໘໖໘) ເຖິງປີ ຈ.ກ.

- <u>ຕໍ່ມາພຽາເທພະວົງ</u> ຜູ້ເປັນນ້ອງລູກເຈົ້ານານ ສະເດັຈໄປຢູ່ເມືອງຊຽງລາບ ໄດ້ຜິດກັນກັບເຈົ້າຟ້າຊຽງແຂງ ເລີຽຣົບກັນ ພຽາເທັພະວົງຈຶ່ງໄດ້ຫນີກັບຄືນໄປເມືອງນ່ານ ເຈົ້າຟ້າຊຽງແຂງ ໄດ້ເກາະຫອມໄພ່ພົລຄົນເມືອງ ສ້າງບ້ານສ້າງເມືອງ ປົກຄອງບ້ານເມືອງ ດ້ວຍຄວາມສຸກຂຸມຊຸ່ມເຢັນຂ້າໄພ້ບ້ານເມືອງເປັນສຸກ.

- <u>ຕໍ່ມາມີຄົນ ເມືອງພົງສອງຄົນ</u> ຊື່ນໍ່ຣະເດັຊ ນໍ່ຣະສິງ ລັກລອບເຂົ້າມາ ຍິງຊ້າງປ່າ ຢູ່ໃນເຂດດິນຊຽງແຂງ ຄົນສືບຈັບໄດ້ຫຼັກຖານແລ້ວ <u>ໃຫ້ເມືອງພົງ ໃຊ້ຄ່າຊ້າງ</u> ເປັນເງິນສາມຫມື່ນ <u>ສອງພັນຊຸ່ງ ເງິນລ້າງ</u> ເມືອງພົງຈຶ່ງໄດ້ນຳເອົາເງິນມາໃຊ້ ແຕ່ວ່າເງິນນັ້ນບໍ່ລ້າງເຈົ້ານາຍທ້າວຂຸນແຂງ ເຫັນເງິນບໍ່ລ້າງບໍ່ຍອມຮັບເອົາ ແລະ ໄດ້ເອົາຕີນເຂັຽເງິນນັ້ນສົ່ງໃຫ້ໃຫພົງ ໃຫພົງໄດ້ຮັບຄວາມຫມິ່ນປະຫມາດດັ່ງນັ້ນກໍກັບຄືນໄປເມືອງພົງ ໄປໃຫ້ວເຈົ້າຂອງເອົາຊາບການຫມິ່ນປະຫມາດກໍພ້ອມກັນຄຽດແຄ້ນນັກຈຶ່ງຂຽນຈົດຫມາຍມາບອກ ເຈົ້າຟ້າຊຽງແຂງວ່າ ເງິນເມືອງພົງ ບໍ່ລ້າງບໍ່ແຖວບໍ່ດີ ແລະ ເອົາຕີນປັດຕີນເຂັ່ຽສົ່ງເມືອງພົງກໍຍິນດີ ແລະ ຈະເອົາອັນໃຫມ່ອັນດີມາໃຫ້ ສົ່ງຈະເອົາມາໃຫ້ນັ້ນກໍແມ່ນ ຄົມດາບ ປາຍຫອກ ລູກນາດລູກປືນ ຈົ່ງຖ້າຮັບເອົາເທີ້ນ.

ດັ່ງນັ້ນທັງສອງຝ່າຍ ໄດ້ຫາງເສິກຣົບກັນ ຣົບຄັ້ງທີ່ ໑໔ ຊຽງແຂງບໍ່ແພ້ເສັຽໃຊຍແກ່ເມືອງພົງ ຊຽງແຂງບໍ່ຍອມ ຈຶ່ງຫ້າງເຄື່ອງເສິກ ພ້ອມທັງຫາຫມໍ້ຕູ ຕູ້ຂວັນນາຍແມ່ທັບຂອງເມືອງພົງ ຕາຍດ້ວຍນາດ ໔ ບອກ ແລະ ດາບ ໔ ຖຸຍນອັນໃສ່ອັ້ນຕູ້ນັ້ນ ຊຽງແຂງຈຶ່ງໄດ້ໄຊຍພາບແພ້ເມືອງພົງ ຈຶ່ງແລ້ວສົງຄາມກັນ ເຈົ້າຂະຕິຍະວົງນິບູຕ ມີ ຊາຍຜູ້ກົກຊື່ ເຈົ້າອຸ່ນແກ້ວ ຜູ້ກາງຊື່ເຈົ້າກາວີຜູ້ປູ່ຍຊື່ເຈົ້ານ້ອຍໃຈນ້ອຍເສວີຍເມືອງໄດ້ (໘໕ ປີ) ເຖິງປີຈ.ສ (໑໘໘໓) ກໍສວັນນະໂຄດ, ດ້ວຍກຸລອຸບາຍ ຂອງທ້າວຂູນຄົນເມືອງອ້າງວ່າ ຈະເອົາເຈົ້ານ້ອຍ ທີ່ຍັງນ້ອຍງເປັນເຈົ້າແທນພໍ່ ກໍເພື່ອບໍ່ມັກເອົາເຈົ້າທັງສອງອັນເປັນພີ່ ເປັນເຈົ້າດ້ວຍພີ່ທັງສອງມີຄວາມຂັດແຍ່ງກັນ ທາງຈະເປັນເຈົ້າແທນພໍ່ ທ້າວຂູນບ້ານເມືອງຈຶ່ງ ອຸພິຕັງເຈົ້ານ້ອຍໃຈນ້ອຍເປັນເຈົ້າແທນພໍ່ ຄົນນ້ອງຖືກເປັນເຈົ້າແທນພໍ່ດັ່ງນັ້ນ ຄວາມບໍ່ພໍໃຈຂອງພີ່ທັງສອງ ຕ່າງກໍຫນີອອກເມືອງ ສ່ວນເຈົ້າກາວີ ໄດ້ພາເອົາຄົນຫມູ່ນຶ່ງ ລ່ອງຕາມນ້ຳຂອງໄປຕັ້ງຢູ່ເຫນືອເມືອງບູນເຮືອງ ຕໍ່ມາເຈົ້າກາວີ ເລີຍໄດ້ເປັນລູກເຂີຍຂອງ ເຈົ້າເມືອງບູນເຮືອງ ທີ່ສຸດເຈົ້າຕົນນີ້ ຍັງໄດ້ໄປເປັນຣາຊການຢູ່ ນະຄອນພານົມ ດິນສຍາມໃຫຄືນເຈົ້າໃຈນ້ອຍຖືກສົມມຸຕິໄດ້ເປັນເຈົ້າແທນພໍ່ແລ້ວ ກໍໄດ້ຜູກສັນໃຊໄມຕີກັບເຈົ້າຟ້າ(ມ່ານທີ່ເມືອງອ່າງວະ) ໃນຣາຊການເຈົ້າໃຈນ້ອຍ ບ້ານເມືອງກໍກ້າວຫນ້າຮຸ່ງເຮືອງ ກໍດ້ວຍຄວາມຄິດຂອງທ້າວຂູນ ແລະ ຄົນບ້ານເມືອງ ເຂົ້າຣອມຕອມຄຳເປັນອັນນຶ່ງອັນດຽວກັນ ຮັກສາເອກຊາຕບ້ານເມືອງໄວ້ຫມັ້ນຄົງນັກ ປາງເມື່ອເຈົ້າຊຽງຕູງມາເປັນເຈົ້າຊຽງແຂງ ຫຼືເຈົ້າເອກະມຸ້ນຕີໃຊຍະສົງຄາມ ແລະ ເຈົ້າເມືອງເຂມະຣາຊຊຽງໃຫມ່ໃຫ ມາເປັນເຈົ້າຊຽງແຂງຄາວນັ້ນ ກໍມີຄວາມມຸ່ງຫວັງຈະກິນເອົາເມືອງຊຽງແຂງໄປເປັນດິນຂອງເຂົາຈິ່ງໆ ແຕ່ກໍກິນບໍ່ໄດ້ ເພາະເພື່ອທ້າວຂູນທືອຄືດ ມີຄຳສາມັກຄີກັນທັງຊາຕ ຕ້ານປັນຄວາມອາທັມ ຂອງເຈົ້າທັງ ມີ ທີ່ມາເປັນເຈົ້າຊຽງແຂງ ກໍໄດ້ປຣາຊາໃຊໄປ ແລະສົງຄາມເມືອງພົງກໍປະຣາໃຊໄປ ໃນທີ່ສຸດສົງຄາມ ອະຍຸທິຍາ ກໍບໍ່ປານຊຽງແຂງໄດ້. ອັນນີ້ແລະຜູ້ປົກຄອງມີ ສິລທັມ ຜູ້ນຳພາໄປທາງແນ່ນ ຜູ້ແລ່ນຕາມກໍມີນ້ຳໃຈແລະຕາມໃຕ່ ໃພ່ແລະເຈົ້າໃຕ່ທາງດຽວ ເປັນກົມກຽວອັນໃຫຍ່ ໃຊຍະຊະນະໃຟຕາມປະສົງ.

ເມື່ອໄດ້ຊາບຂ່າວຄາວ ເມືອງກຸງສີ ອະຍຸທິຍາ ຈະແຜ່ອຳນາດສົງຄາມ ຂຶ້ນມາທາງເຫນືອແລ້ວ ບ້ານເມືອງຝ່າຍເຫນືອກໍພາກັນ ຮູ້ນຮ້ອນຫາບ່ອນ ປ້ອງກັນສົງຄາມເຈົ້າຫນໍ່ຄຳທີ່ຢູ່ເມືອງຢູ້ ກໍໄດ້ຈັດຄົນ ສ້າງວຽງຈອມທອງທີ່ເມືອງຢູ້ ວຽງນັ້ນມີຄູສູງອ້ອມຮອບ ທາງໃນກວ້າງແລະຫຼາງ ສ້າງແລ້ວກໍເອົາກັນເຂົ້າຢູ່ໃນວຽງນັ້ນ ເຊືອເຄືອເຈົ້າຟ້າ

ຊຽງແຂງ ແລະທ້າວຂູນທີ່ຢູ່ຊຽງແຂງ ກໍປົດເອົາກັນໄປຢູ່ວຽງສອນທອງ ທີ່ເມືອງ
ຢູ້ຫນົດ ເມື່ອຖືກກອງທັບ ກຸງສີອະຍຸທິຍາມາຕີ ວຽງນັ້ນຈຶ່ງບໍ່ແຕກດ້ວຍຄວາມຕໍ່ຕ້ານ
ອັນແນ້ນຫນຽວ ຂອງກຳລັງອັນຢູ່ໃນວຽງນັ້ນ.

<u>ຄາວຕັ້ງເມືອງສີ່ງຄັ້ງທີ່ນຶ່ງ</u> ປີ ຈ.ສ (໑໑໕໔)

ທີ່ນີ້ຈະກ້າວຍ້ອນຫຼັງ ຄາວຕັ້ງເມືອງສີງໃຫ້ຮູ້ກ່ອນແລະເມັຽຫມ້າຍຂອງເຈົ້າ
ສຸຣິນທາ ແມ່ຂອງເຈົ້າທັງ ໕ ຄື: <u>ເຈົ້າຍອດໃຈແພງ</u> ຈະ<u>ແສງສີ</u> <u>ຕ່ອມຄຳແດງ</u>
<u>ທ.ອິນແປງ</u> <u>ທ.ບຸນແຟງ</u> <u>ທ.ບຸນແພງ</u> ເມື່ອເຫັນລູກຂອງຕົນຄື: ຍອດໃຈແພງຮຽກ
ວ່າເຈົ້າສອງເມືອງ ແລະ ຕ່ອມຄຳແດງຮຽກວ່າ ເຈົ້າເມືອງຊາຍ ຜິດຖຽງຣົບລາ
ຂ້າຟັນກັນ ທັງມີຜູ້ນັບຖືລູກ ຜູ້ຊື່ແສງສີນັ້ນ ຈຶ່ງໄດ້ພາເອົາລູກຜູ້ນັ້ນ ແລະ ຜູ້ຄົນຫຼາຍ
ຄອບຄົວ ໄປຕັ້ງຢູ່ເມືອງສີງ ທຳອິດແຕ່ຕົ້ນຕັ້ງຢູ່ວຽງຫົວນ້ຳດ້າງແລ້ວຈຶ່ງຍ້າຍໄປຕັ້ງ
ວຽງ ຢູ່ທີ່ລາບປອດໃດ້ຊື່ວຽງຟ້າຍາ ຄົນທັງຫຼາຍກໍ່ພາພັນຕັ້ງບ້ານ ຢູ່ຕາມທົ່ງເມືອງ
ສີງຫຼາຍໆບ້ານ ແລະຕັ້ງບ້ານໄປຕາມລວງນ້ຳມະຄື: ເມືອງມົງ ເມືອງກາງ ເມືອງ
ລອງ ເມືອງອານ ຊຽງກົກ ຕັ້ງວັດວາອາຣາມ ກໍ່ເຈດີຍະທາດ ໄວ້ສັກກາຣະບູຊາ
ຫຼາຍໆດວງ ໃນທົ່ງເມືອງສີ່ງເປັນຕົ້ນ<u>ທາດຊຽງຕົມ</u> <u>ທີ່ນ້ຳແກ້ວນ້ອຍ</u> ວັດ<u>ທອງປ່າຟາງ</u>
<u>ຫົວທົ່ງສີ່ງ</u> <u>ບ້ານຂວາງ</u> <u>ນ້ຳແກ້ວຫຼວງ</u> <u>ຄົ້ງເສືອ</u> <u>ປາງສາ</u> ທັງຫມົດມີຢູ່ໃນທົ່ງເມືອງສີ່ງ
ນອກນັ້ນຍັງມີ<u>ທາດຫິນຟູ</u> ຢູ່ບ້ານຊາຍ <u>ຈອມຈວງ</u> ເມືອງມົງ <u>ເມືອງກາງ</u> <u>ພາຄຳ ແລະ</u>
ຈອມຫມອກ ເມືອງສອງ <u>ແມວສີ່ຢູ່</u> ເມືອງສະ ບ້ານເມືອງກ້ານກຸງຮຸ່ງເຮືອງ ມີແມ່ແລະ
ລູກ ຜູ້ຊື່ວ່າທ້າວແສງສີຕັ້ງນາມວ່າ ເຈົ້າຂະຕິຍະວົງ ເປັນເຈົ້າແກ່ບ້ານເມືອງແລະເອົາ
ຮວມກັນກັບຊຽງແຂງ ເມືອງສີ່ງຄາວນັ້ນ ເປັນທີ່ລືຊາປາກົດດ້ວຍ ເຂົ້າປາອາຫານ ບໍ
ອຶດບໍ່ຢາກ ນ້ຳມີປານາມີເຂົ້າ ສັດປ່າມີຫຼາຍມີຮອດ ສີງ ຊ້າງ ແຮດ ຄະທິງ ຫມີເຫມີຍ
ຫມູ ກວາງ ຟານ ສັດນ້ອຍນັບບໍ່ຖ້ວນ ຄົນຕ່າງບ້ານຕ່າງເມືອງ ກຳລັງຫຼັ່ງໃຫຼ ເຂົ້າມາ
ຢູ່ເມືອງສີງເຈົ້າຂະຕິຍະວົງ ມີບຸດຊາຍຄົນນຶ່ງຊື່ວ່າເຈົ້ານ້ອຍເຖິງປີ ຈ.ສ.( )

<u>ເມືອງກຸງສີອະຍຸທິຍາ ຂຶ້ນປາຍ ຫົວເມືອງຝ່າຍເຫນືອ</u>

ເຈົ້າຄະສັດກຸງສີອະຍຸທະຍາ ແລະ ເຈົ້າຟ້າຊຽງໃຫມ່ປົງແຕ່ງໃຫ້ເຈົ້າຟ້າມ່ານ
ແຜ່ອຳນາດ ສົງຄາມຂຶ້ນມາຊຽງແຂງເມືອງຍອງແລະເມືອງແລມຊຽງຮຸ່ງໃຫ້ໄປເຂົ້າ
ກອງອຳນາດຂອງພະອົງຄ໌ ແຕ່ງໃຫ້ເຈົ້າຟ້າມ່ານຍົກທັບຂຶ້ນມາຕີ ໑໔ ພັນນາຝ່າຍ

ເໜືອຂອງຕາວັນອອກ ລົງມາເຖິງ ເມືອງສິງ ໃນປີ ຈ.ສ (໑໒໐໐) ເຈົ້າຟ້າ ນ່ານເອົາກຳລັງທັພຂັ້ນຕື ແລະ ກວາດເອົາຄົນ ເມືອງປ່ອນ ເມືອງພົງ ເມືອງ ມາງ ດົນ ໑໒ ພັນນາ ແລະ ເມືອງສິງດົນຊຽງແຂງ ເມືອງຫຼວງພູຄາ ທັງໝົດ ໃຫ້ລົງໄປເມືອງນ່ານ ສ່ວນຄົນເມືອງສິງ ເມື່ອມາເຖິງເມືອງພູຄາມີເຈົ້ານັ້ຍເປັນ ຫົວໜ້າ ໄດ້ລັກພາເອົາຄົນເມືອງສິງ ລັກໜີກັບຄືນໄປໄດ້ນີ້ສ່ວນສີ ນອກນັ້ນກໍໄດ້ ລົງໄປເມືອງນ່ານ ທັງໝົດຫຼາຍພັນຄອບຄົວໄດ້ໄປສ້າງຢູ່ດົນນ່ານ ດັ່ງຄົນ ເມືອງ ປ່ອນ ເມືອງພົງ ເມືອງມາງ ມີບ້ານປ່ອນ ບ້ານມາງ ບ້ານໝາກເຂືອຊຽງຄຳ ບ້ານແພດ ຊຽງບານ ບ້ານຊຽງຈັນ ດົນ ໑໒ ພັນນາ ໃຫ້ຕັ້ງຢູ່ຈູມນັ້ງ ຄົນພວກ ນັ້ນໄດ້ຖືເອົາຊື່ບ້ານເດີມຂອງເຂົາເຈົ້າອອກ ເປັນຊື່ຕໍ່ມາ ຈຶ່ງປະກົດຊື່ວ່າ ວ່າ ເພືອຊຽງຄຳ ຢູ່ດົນໃທປະຈຸບັນນີ້ ສ່ວນຄົນເມືອງສິງ ແລະ ເມືອງຫຼວງພູຄາ ໃຫ້ ຕັ້ງເປັນເມືອງ ແລະເຈົ້ຟ້ານ່ານ ໄດ້ຕັ້ງເຈົ້າອິນປັນລູກຂອງຕົນເປັນ ເຈົ້າຟ້າຊຽງ ແຂງ ປົກຄອງຄົນເຮົານັ້ນນານໄດ້ສອງປີເຈົ້າອິນປັນກໍຕາຍເສັຍ ພວກຄົນເມືອງສິງ ເມືອງຫຼວງພູຄາ ຊຽງແຂງ ທີ່ໄປຕັ້ງຢູ່ດົນໃທ ຄົງບໍໄດ້ເອົາຊື່ບ້ານເດີມ ອອກຊື່ຫຼື ຈຶ່ງບໍໄດ້ປະກົດຊື່.

ຄົນເມືອງສິງ ຊຽງແຂງ ພວກລັກໜີກັບຄືນນັ້ນ ກໍໄດ້ຕັ້ງບ້ານເລກເມືອນັ້ຍ ພາກັນຕຽດຢູ່ຕຽດກິນພໍໃຜມັນ ເພາະຢ້ານໃທ ຈະມາກວດເອົາໄປ ເວລານັ້ນຄົນ ໄດ້ຕັ້ງຢູ່ຫວ່າງຫ່າງກັນ ໃນທົ່ງເມືອງສິງເປັນເມືອງຮ້າງ (ຫຼັງນັ້ນມາເຈົ້າຟ້ານ່ານ ໄດ້ແຕ່ງໃຫ້ເຈົ້າຫຼວງກຸມມະຊ້າງ) ພາເອົາຜູ້ຄົນ ເມືອງນ່ານເມືອງເງິນ ມາຕັ້ງ ເມືອງຫຼວງຫົວທາ ແລະ ພູຄາໃຫ້ເປັນບ້ານເປັນເມືອງ ເມື່ອປີ ຈ.ສ.(      )

ຕອນສ້າງເມືອງສິງ ຄັ້ງທີ ໒

ເມື່ອປີຈຸລະສັກຣາຊ ໑໒໙ ຕົວ

ເຄືອຍາຕິວົງສາ ຂອງເຈົ້າຟ້າຊຽງແຂງ ທີ່ຕັ້ງຢູ່ເມືອງຍູ້ ພ້ອມຄົນບ້ານ ເມືອງ ກໍຫຼາຍຂຶ້ນ ຫາບ່ອນເຮັດສ້າງບໍພໍກິນ ເມືອງຍູ້ເປັນເມືອງນ້ອຍຈຶ່ງພ້ອມປະຊຸມ ຕົກລົງກັນ ຈະມາສ້າງເມືອງສິງ ອັນເປັນບ່ອນທີ່ກວ້າງກວາງ ເປັນທີ່ອຸດົມສົມບູນ ດ້ວຍ ເຂົ້າປາອາຫານດ້ວຍ ແຕ່ວ່າເຫັນຈະມີປັນຫາກັນຄານຂໍ້ ໑ ເມືອງສິງ ບໍຫ່າງໄກກັບເມືອງພົງໆ ເປັນຂ້າເສິກເກົ່າກັບຊຽງແຂງ ປ້ານສຕຣູເກົ່າເມືອງ ພົງຈະມາຣົບຟັນກັນອີກ ໒ ຢ້ານສຍາມໃທ ຈະມາກວາດເອົາໄປອີກເພື່ອແກ້ປັນຫາ

MISS LORM. A SAYSAMORN & MISS NO



ສອງຂັ້ນນີ້ ຈຶ່ງຕົກລົງແກ້ປັນຫາຂໍ້ທີ ໑ ໄປຂໍສັມພັນຢູ່ຮ່ວມກັບ ກຸງສີອະຍຸທະຍາ ຈຶ່ງແຕ່ງທ້າວຂູນ ເອົາຣາຊສານ ແລະ ເຄື່ອງປັນນະການຂອງຝາກ ມີມ້າ ແລະງາ ມ້າລາຍເສືອ ໄປຖວາຍເຈົ້າຟ້າກຸງສີອະຍຸທິຍາງ ຍິນດີນຳສານສຳພັນຢູ່ຮ່ວມກັນນີ້ ຈຶ່ງເອົາຊ້າງ ພູ້ມງົ່ວຊູ້ພູບານ ຕອບສານສຳພັນຢູ່ຮ່ວມນີ້ ແຕ່ງເຄື່ອງສອດໝາຍ ເອົານາງ ໃຫ້ທ້າວຂູນທູດານຳໄປ ຂໍສອດເອົານາງເມືອງພົງມາເປັນມະເຫສີ ຂອງເຈົ້າສຣິໜໍ່ຄຳ ກໍໄດ້ນາງມາ ຕາມປະສົງນາງນີ້ຊື່ສາຍົວຄຳ ຄັນໄດ້ສາບົວຄຳມາເປັນ ມະເຫສີຂອງເຈົ້າສຣິໜໍ່ ແລ້ວ ແລະໄດ້ຄວາມດີຄວາມຊອບ ຈາກເຈົ້າຟ້າກຸງສີອະຍຸທະຍາແລ້ວ ກໍຈັດກັນອອກມາ ຕັ້ງເມືອງສົງທັນທີ່ ກ່ອນຈະອອກມານັ້ນ ຄຳລືຊາໄປເຖິງຫຼາຍບ້ານຫຼາຍເມືອງ ພວກຢາກມາສ້າງຢູ່ເມືອງສົງ ກໍໃຫ້ກັນມາຕັ້ງຢູ່ກ່ອນ ຄົນເມືອງຣຳດີນ ໑໔ ພົນມາຕັ້ງຢູ່ບ້ານຍາງປຽງນີ້ ບ້ານນ້ຳແກ້ວຫຼວງມາແຕ່ຊຽງຕູງມາຕັ້ງເປັນນ້ຳແກ້ວຫຼວງ ຄົນເມືອງກາຍ ມາຕັ້ງເປັນບ້ານຫົວໂຂງ ເມືອງນຳມາຕັ້ງເປັນບ້ານນາຄຳດຽວນີ້ ຄົນບ້ານດອນມ້ຽເມືອງຍູ້ ມາຕັ້ງເປັນບ້ານດອນປຽ ທ່າປ້າວ.

ທ້າວຂູນພວກທີ່ ຖືກແຕ່ງຕັ້ງໃຫ້ນຳໜ້າ ພາເອົາຄົນມາຕັ້ງເມືອງສົງເວລານັ້ນ ມີ ໑ ພຍາຫຼວງໂຂຄຳ ໒ ພຍາຫຼວງສົມບັດ ມີ ແສນທະນະໂຈຕິ ແລະ ຄົນເມືອງຫຼາຍຮ້ອຍຄົນ ແຕ່ຕົ້ນວ່າເຈົ້າສຣິໜໍ່ກໍຈະເສັດຈມາພ້ອມ ແຕ່ບັງເອີນ ພິເຂີຍທາງຊຽງຕູງໄດ້ແຕ່ງຄົນມາເຊີນເຈົ້າລົງໄປຊຽງຕູງ ເຈົ້າຈະໄດ້ໄປຊຽງຕູງ ຈຶ່ງໃຫ້ສາບົວຄຳ ນາງປາຍຂອງພະອົງ ນຳພວກທ້າວຂູນ ແລະ ຄົນທັງຫຼາຍອອກຈາກເມືອງຍູ້ມາຕັ້ງເມືອງສົ່ງຖ້າ ຄັນມາເຖິງເມືອງສົງ ກໍມາຕັ້ງຕຳໜັກ ວຽງໃຊຍ ຢູ່ນີ້ບ້ານນ້ຳແກ້ວຫຼວງ ຈັດກັນຜູ້ຮ້ວຖາຍ ສ້າງບ້ານສ້າງເມືອງຂຶ້ນ ໃຫ້ຮູ່ງເຮືອງການປະຕິສົ່ງຂອນນີ້ ແມ່ນສາບົວຄຳຕາງໜ້າສາມີ ເປັນເຄົ້າທ້າວຂູນຮົ່ງເມືອງ ພາກັນສ້າງ ເວລາເຈົ້າສຣິໜໍ່ ຍັງຢູ່ຊຽງຕູງນັ້ນ ສາບົວຄຳລັກເຫຼັ້ນຊູ້ກັບບ່າວຊາຍ ຜູ້ຊື່ອ້າຍໃຫມ້ຝັ້ນ ເລີຍເປັນທາຕູ ໃຫ້ນາງຕັ້ງທ້ອງມານລູກ ມີຜູ້ລາຍງານໃຫ້ເຈົ້າສຣິໜໍ່ຊາບ ເຈົ້າຈຶ່ງຂຽນໜັງສືມາ ເວົ້າໃຫ້ສາບົວຄຳ ຄັນສາບົວຄຳຊາບ ກໍມີຄວາມຄຽດແຄ້ນ ແລະນຶກວ່າ ເປັນນຳແສນທະນະໂຈຕິ ລາຍງານໃຫ້ຜົວຕົນຊາບແລ້ວສາບົວຄຳ ຈຶ່ງອານັດເອົາຄົນຮ້າຍເມືອງພົງ ມາລອບຂ້າແສນທະນະໂຈຕິຕາຍ ແສນທະນະໂຈຕິ ແມ່ນຄົນເຂີນຊຽງຕູງ ເມື່ອຄັພະທ້ອງຂອງສາບົວ ໃຫ້ມາຫຼາຍ ສາ

MissLom



ບົວຄຳກໍລັກຫນີ ກັບຄືນໄປເມືອງພົງ ທ້າວຂູນຈຶ່ງໄດ້ລາຍງານການເປັນໄປທັງ ຫມົດ ໃຫ້ວ ຣຖິງເຈົ້າສຣີຫນໍ່ ຢູ່ທີ່ຊຽງຕູງຫຼົງຊາບ ວ່າບ້ານເມືອງເປັນປະຣິກູຕາດັ່ງນີ້ ຂໍຣາທະນາເຈົ້າໄດ້ ສະເດັດກັບຄືນມາເປັນສັຖເປັນຮູ່ມດ້ວຍ ຄົນ ເຈົ້າຕຣັດແລ້ວ ຈະເສັດຈກັບມາດ້ວຍດ່ວນບໍໄດ້ເທື່ອ ເພາະພີ່ເຂີຍຍັງບໍທັນໄດ້ ກັບມາ ແຕ່ຕ່ອງກີ ເມືອງມ່ານເພາະພິເຂີຍ ໃຫ້ຮັກເມືອງຊຽງຕູງແທນ ອາການ ມີເຢນດັ່ງນີ້. ເຈົ້າຈຶ່ງແຕ່ງໃຫ້ ຄົນຊຽງຕູງ ສອງຄົນອ້າຍນ້ອງ ຜູ້ພີ່ຊື່ເຈົ້າພຍາ ຫານຜູ້ນ້ອງຊື່ເຈົ້າຂະຫນານໂປ່ ທັງສອງເປັນຂຸນຫານ ພາເອົາຄົນມາຮັກສາ ເມືອງສິງ ຢູ່ຖ້າເຈົ້າຟ້າ ຄົນສອງອ້າຍນ້ອງ ມາເຖິງເມືອງສິງກໍໄດ້ຮຽກປະຊຸມ ແລະໄຕ່ຖາມເຫດການ ທີ່ເປັນມາແລ້ວທັງຫມົດຄົນປະຊຸມຄັ້ງທີ ໔ ກໍໄດ້ອາມັດ ຈັບຍັບເອົາຕົວຂູນເຖົ້າທັງສອງຄື: <u>ພຍາຫຼວງໂຂຄຳ ແລະ ພຍາຫຼວງສົມບັດ</u> ມັດຂັງຄອກໄວ້ແລະທາວ່າຂູນທັງສອງ ຄິດການບໍ່ດີ ເລີຍຈະມາໄປຂ້າເສັຍ ເມື່ອ ນຳອອກໄປສູ່ບ່ອນຂ້າ ຄົນທັງສອງ[illegible]ບໍ່ຍວ່າ ໄດ້ມາປັດຂີ້ຊ້າງ ລ້າງຂີ້ ເສືອ ສ້າງບ້ານສ້າງເມືອງ ບໍໄດ້ກະທຳຜິດຢ່າງໃດເລີຍຈະໄດ້ເຖິງຕາຍດັ່ງນີ້ ບ້ານເມືອງອື່ນນີ້ ໃຜໄດ້ມາເປັນເຈົ້າບ້ານເຈົ້າເມືອງອື່ນນີ້ ກໍຢ່າໄດ້ຫມັ້ນທ່ຽງ ໃຫ້ພົ້ນຈິບພົ້ນຫາຍ ໃຫ້ພົ້ນຕາຍດັ່ງຂ້າທັງສອງ ນີ້ແທ້ເທີ້ນ ເຂົານຳເອົາຄົນທັງ ສອງອອກໄປທາງວັນຕົກ ສ່ວນພຍາຫຼວງໂຂຄຳ ບໍຢາກຕາຍເມື່ອອອກໄປກໍເກາະ ຜັ່ນບ່ອນນີ້ບ່ອນນັ້ນເກືອກນອນ ເຂົາກໍລາກໄປ ພົ້ນບ້ານ ເຖິງທີ່ຕົ້ນສຣີຫຼ່າຍວັດ ນ້ຳແກ້ວຫຼວງ ກໍຂ້າເສັຍທີ່ນັ້ນ ພຍາຫຼວງສົມບັດນັ້ນນຳອອກໄປໄກຈາກບ້ານພໍ ປະຫມານ ກໍຂ້າເສັຍທີ່ດອນປ່າເຫມົດ ຫຼັງຈາກຂ້າຄົນທັງສອງແລ້ວ ສອງອ້າຍ ນ້ອງກໍຕັ້ງຕົວເປັນໃຫຍ່ ວ່າເຈົ້າອາດຍາ ເປັນເຄົ້າໃພ່ເມືອງ ສ້າງບ້ານເມືອງ ຕໍ່ໄປ ຈຶ່ງລາຍງານການເປັນໄປ ໃຫ້ວເຈົ້າສຣີຫນໍ່ທີ່ຊຽງຕູງຊາບ ແລະ ດ້ວຍຄວາມ ສຣາດຂອງເຈົ້າຟ້າສຣີຫນໍ່ ກໍອະນູໂຮມຕາມຄວາມເຫັນຂອງ ເຈົ້າພຍາຫານທີ່ຕົ້ນ ໄດ້ແຕ່ງມາຮັກສາເມືອງສິງ ຢູ່ຖ້າຕົ້ນທຸກປະການ.

<u>ຕອນຍ້າຍວຽງໄຊ ນ້ຳແກ້ວ ມາຕັ້ງວຽງໄຊຕອນສິງເວລານີ້:</u>

ເມື່ອປີ ຈ.ກ ໑໔໗໔ ຕົວ ເດືອນ ສີ່ ອອກ ໑໐ ຄ່ຳ

ເຈົ້າອາຈຍາ ຊຶ່ງເປັນຜູ້ ຕາງຫນ້າເຈົ້າສຣີຫນໍ່ນັ້ນ ເຫັນວ່າຕັ້ງວຽງໄຊ ທີ່ແຄມນ້ຳແກ້ວຫຼວງນັ້ນ ບໍສູ່ຢູ່[illegible]ໃກແລະທັງເປັນທີ່ ບໍເຫມາະສົມ




<u>ຫມາຍເຫດ</u>

ຮ່ອງນ້ຳຄິວຽງ

ດັນດູ ຕ່າງຍຽງ

ທາງໃນ່ວຽງມີຮ່ອງນຳເລາະທັງສອງຟາກຕຼອດ
ວັສ໊ດຸ
ເຮືອນ

ໂອ ເຂົ້າອອກວຽງ

ໃນວຽງ ໔ ດ້າວ
-ຕູ້ມວັນອອກເຫນືອ ດ້າວຊຽງອິມ
" ໃຕ້ " ຊຽງໃຈ
-ຕູ້ມວັນຕົກເຫນືອ " ຊຽງແຜລ
" ໃຕ ຊຽງຍືນ
-ທີ່ຄຳຢູ່ກາງ ປີສີຫນ້າຕໍ່ທາງໃຫ່ຽ
ທັງສີ່ດ້ານ

ຄວນຈຶ່ງໄດ້ປະຊຸມທ້າວຂູນ ຄົນເມືອງທັງມວນ ພ້ອມກັນ ຈະຍ້າຍວຽງນ້ຳແກ້ວ ເຂົ້າມາຕັ້ງໃນມະຫານະຄອນ ບອນນາຂອງບ້ານນ້ຳແກ້ວຫຼວງ ແລະ ໄດ້ອານຸຍາດໃຫ້ນ້ຳແກ້ວຫຼວງເລືອກເອົານາບ່ອນໃໝ່ຕາມຄວາມມັກ ເມື່ອຕົກລົງເຫັນຊອບແລ້ວ ຈຶ່ງໄດ້ລາຍງານຂຶ້ນຂາບໃຫ້ເຈົ້າຟ້າສຣິໜໍ່ ທີ່ຊຽງຕູງ ເພື່ອຂໍຄວາມຊົງດຳຣິ ທາກຊົງຊອບແລ້ວ ຂໍທັງສະຫຼ່າສ້າງຫໍຄຳດ້ວຍ ຄັນເຈົ້າຊາບແລະຊົງພໍພະໄທແລ້ວ ກໍຈັດຫາຊ່າງສິ່ງມາພ້ອມ ເມື່ອໄດ້ຮັບຄວາມຊົ່ງຊອບຂອງເຈົ້າຟ້າສຣິໜໍ່ແລ້ວ ຈຶ່ງຈັດເກັນເອົາຄົນ ທຸກໆຫົວເມືອງຕາມບ້ານນ້ອຍໃຫຍ່ ທີ່ຂຶ້ນກັບຊຽງແຂງ ສອງພັນຄົນ ມາທຳການສ້າງວຽງນີ້ ດັ່ງມີແບບແຜນຂນາດຕໍ່ໄປນີ້ ຮູບສີ່ແຈ່ງ ໔ ດ້ານ ດ້ານໃດກ້ວາງ ໕ ຮ້ອຍຫ້າວາ ມີຮ່ອງຄື້ກວາງ ໒ ວາ ລຶກວາອີກ ອ້ອມຮອບ ມີນ້ຳໃຫຼທຸກເວລາ ປ່ານຈາກຮ່ອງຄືເຂົ້າໄປທາງໃນສາມວາ ກໍ່ຄັນຄູ້ກວ້າງ ໒ ວາ ສີ່ງວາອີກອ້ອມຮອບ ມີປະຕູ ໔ ດ້ານ ວັນອອກ ວັນຕົກ ທິສເໜືອ ທິສໃຕ້ ທາງໃນວຽງຕັດທາງເປັນຕາກາໂລ ສີ່ແຈ່ງ ມີນ້ຳໃຫຼຮ່ອງສອງຟາກທາງຕຼອດ ທຸກຮອງ ທາງແລະຮ່ອງ ກ້ວາງ [illegible] ວາ ທາງໃຫຍ່ ໔ ດ້ານເຂົ້າຫໍຄຳ ດັ່ງມີຮູບແຜ່ນທີ່ວຽງ ຢູ່ຂ້າງໜ້ານີ້ ກາງແມ່ນຄູ້ມຫໍຄຳພະຣາຊວັງ.

ເມື່ອກຳລັງສ້າງວຽງຢູ່ນັ້ນ ເຈົ້າຟ້າສຣິໜໍ່ ກໍສເດັຈກັບມາແຕ່ຊຽງຕູງ ເຖິງເມືອງຢູ່ແລ້ວ ກໍໄດ້ນຳເອົາ ຣາຊະເທວີ ຣາຊກັນຍາແລະບຸດ ພ້ອມທ້າວຂູນ ນົນຖີ ບ່າວໄພ່ພົລ ມາເມືອງສິງ ຄັນສ້າງວຽງແລະຫໍຄຳເສັດແລ້ວ ກໍເອົາກັນເຂົ້າຢູ່ວຽງໃໝ່ ຫໍໃໝ່ຜູ້ນຳໜ້າຂຶ້ນຫໍໃໝ່ ແມ່ນຄົນບ້ານບໍ່ ເພາະວ່າບ້ານບໍ່ແມ່ນເຊື້ອຊາຕຂອງ ພຍາມີໂມ ພໍ່ເມັຍຂອງເຈົ້າຟ້າເຫຼັກນ້ອຍ ຄົນຢູ່ເຮືອນອນຫໍ ກໍແມ່ນບ້ານບໍ່ ບ້ານແປກ ບ້ານມອກ ບ້ານເຫຼັກ.

<u>ຄັນເຂົ້າຢູ່ ວຽງໃໝ່ ຫໍຄຳໃໝ່</u> ຈຶ່ງຕັ້ງຊື່ວ່າ ນັກຄຣະສີຫາ ກູປະສີສະເຈຣາຊາທານີ ຊື່ວ່າວຽງໄຊຍສິງຫາຣາຊທານີທັງຕັ້ງຊື່ບ້ານໃນວຽງເປັນ ໔ ດ້າວ ຄື: ຈຸ້ມແລະຄູ້ມແຈວັນອອກ ແຈ່ງເໜືອ ຊື່ ດ້າວຊຽງອິນ ແຈວັນອອກໃຕ້ຊື່ ດ້າວຊຽງໃຈ ວັນຕົກແຈງໃຕ້ ຊື່ ດ້າວຊຽງຍືນ ຄູ້ມແຈວັນຕົກເໜືອ ຊື່ ດ້າວຊຽງແລຕໍ່ມາ

<u>ຄັນໄດ້ເລີກງານຍານດີ</u> ວັນຣິຕາທິຖີ ກໍຫົດສົງນ້ຳຣາຊາພິເສັກ ເຈົ້າສຣິໜໍ່ ຂຶ້ນເປັນເຈົ້າຟ້າ ຕັ້ງຣາຊພະນາມວ່າເຈົ້າຟ້າສຣິສະເປຈັງລະຣາຊາ, ແລະ

ຕັ້ງນາມະຍົສ ສັກສິດເຈົ້ານາຍທ້າວຂູນທັງຫຼາຍຕໍ່ໆໄປ.

ຕັ້ງເຈົ້າພຍາທານເຈົ້າອາຈຍາ ຂຶ້ນເປັນເຈົ້າອາຈຍາຫຼວງຕົນພະນາຂວາ ເຈົ້າຫມານໂປ ເປັນເຈົ້າພຍາມູງເມືອງ ເຈົ້າພຍາຫຼວງພິມວົງພຍາຫຼວງພູນທານ ພຍາຫຼວງຊູມພູ ພຍາຫຼວງພິມປສັ້າ ພຍາຫຼວງພາວະດີ ພຍາຫຼວງໄຊຍວົງ ພຍາຫຼວງເຂື່ອນ ພຍາຫຼວງຄຳວົງ ພຍາຫຼວງສີທິວົງຣາຊ ພຍາຫຼວງຣາຊະວົງ ນອກນັ້ນຍັງມີຂຸນພຍາ ຂຸນຣາຊາ ຂຸນແສນ ຂູນຫມື່ນ ທ້າວ ເສນາພະອົງກໍໄດ້ປົກຄອງໄພ່ບ້ານ ຄົນເມືອງ ຕາມຫນ້າທີ່ໃຜລາວດ້ວຍຄວາມເອົາໃຈໃສ່.

ເຈົ້າຟ້າອົງຄ໌ນີ້ ໃຈບຸນພະອົງຄ໌ທົຣງ ຣັກສາສີລກິນທານສ້າງວັສວາອາຣາມ ເຈດີຍະທາຕຸ ໃຫ້ຮູ່ງເຮືອງ ພະອົງຊ່າງສີມີສັກຂວັກພຸທະຮູບແລະຮູບອື່ນໆອັນປະຫມິທ ຖວາຍທານດ້ວຍເຕຊະອານຸພາບ ບຸນຄຸນຂອງພະອົງຄ໌ ແລະບຸນຄຸນພຸະພຸທພະ

people ທັມ ພຸະສົງ ໄພ່ຟ້າຂ້າແຜ່ນດິນ ພາກັນຢູ່ສຸກກິນບານບໍ່ອຶດບໍ່ຢາກ ບ້ານເມືອງ ແລະສາສນາ ກ້ານກູ່ງຮູ່ງເຮືອງ ພຸະອົງຄ໌ ຣາຊເທວີ ຣາຊກັນຍາ ໓ ຄົນ ເທວີຊື່ ນາງພິງ ມີບຸດ ໓ ຄົນຜູ້ກົກຊື່ເຈົ້າຫມ່ອມອົງຄຳ ຜູ້ກາງຊື່ນາງປະທູມມາ ເປັນເທວີຂອງເຈົ້າຟ້າຊຽງຕູງ ເມັຍກາງຊື່ວ່ານາງນັ້ຍບໍ່ມີລູກ ເມັຍປາຍຊື່ນາງຄຳແດງ ມີບຸຕຊາຍອົງຄ໌ນຶ່ງ ຊື່ເຈົ້າຫມ່ອມທິພະມະນີຄຳຢູ່ມາເຖິງປີ ຈ.ກ (          ) ເດືອນສີ່ລົງເກົ້າຄ່ຳ ເຈົ້າຄູນພິໄຊຍ ຊຶ່ງພະມະຫາຄະສັຖ ກູງສີອະຍູທິຍາ ຕັ້ງໃຫ້ໄປນັ່ງເມືອງນ່ານໄດ້ໃຊ້ຄົນ ມາເຊີນ ເຈົ້າຟ້າເມືອງສິ່ງ ໃຫ້ໄປປະຊຸມທີ່ ເມືອງນ່ານເຈົ້າຟ້າບໍ່ໄປ ຈຶ່ງແຕ່ງໃຫ້ ຣາຊາຂັຕິຍະ ແລະແສນທະນີຍະໄປຕາງພະອົງຄ໌ ການປະຊຸມມີໃຈຄວາມວ່າ ເຈົ້າຟ້າເມືອງສິງ ຊຽງຮູ່ງ ຊຽງຕູງ ແລະ ຊຽງໃຫມ່ ຕ້ອງເຂົ້າຮ່ວມ ກູງສີອະຍູທິຍາ ຖ້າຜູ້ໃດຍິນດີເຂົ້າ ກໍໃຫ້ວ່າຖ້າບໍ່ເຂົ້າກໍໃຫ້ວ່າ ຂຸນໃຊ້ທັງສອງໃກ້ກັບມາລາຍງານການປະຊຸມ ຖວາຍເຈົ້າຟ້າໆ ທັງຊາບແລ້ວ ເລີຍບໍ່ຕອບປະການໃດ ຢູ່ມາເຖິງປີລູນ ເດືອນສາມແຮມ ຟາຍເມືອງນ່ານຈຶ່ງແຕ່ງໃຫ້ ຫຼວງເທັພະວົງແລະແສນສີຣິ ເອົາບ່າວຊາຍ ໓໐ ຄົນ ຂຶ້ນມາຖາມເຈົ້າຟ້າອິກ ເຈົ້າຟ້າຈຶ່ງໄດ້ຕອບພວກຄົນໃຊ້ເມືອງນ່ານວ່າ ການເຂົ້າຢູ່ເມືອງສິງນີ້ ກໍໄດ້ໄປຕົກລົງກັບເຈົ້າຟ້າ ກູງສີອະຍູທິຍາແລ້ວ ຖ້າວ່າຂານຮັບຄວາມ ກັບພວກທ່ານແລ້ວກໍປຽບດັ່ງເຂົ້າກັບເມືອງນ່ານເທົ່ານັ້ນ ພວກຄົນໃຊ້ໄດ້ຮູ້ດັ່ງນັ້ນ ຈຶ່ງພາກັນກັບຄືນໄປເມືອງນ່ານ.

ຢູ່ຕໍ່ມາເຖິງ ເດືອນ ໑໔ ປີດຍອກັນນີ້ ມີເຈົ້າຫຼວງສຸຣິຍະຜູ້ຕາງຫນ້າຂອງ

ພະເຈົ້າຊີວິດກຸງສີອະຍຸທິຍາ ໄດ້ພາເອົາຜູ້ຄົນ ຂຶ້ນມາເຖິງເມືອງພູຄາແລ້ວສົ່ງຈົດ ໝາຍມາຫາເຈົ້າຟ້າ ມີໃຈຄວາມວ່າ ຂ້າພະເຈົ້າເຈົ້າຫຼວງສຸລິຍະຜູ້ຕາງພະພັກ ຂອງເຈົ້າຊີວິດກຸງສີອະຍຸທິຍາ ໄດ້ຂຶ້ນມາເຖິງ ເມືອງພູຄາແລ້ວ ຄັນເຈົ້າຟ້າເມືອງ ສິງຈະເຂົ້າຮ່ວມ ກຸງສີອະຍຸທິຍາ ແນ່ແທ້ ຈະລົງມາຕົກລົງກັນ ທີ່ພູຄາກໍໄດ້ ຫຼື ຈະ ໃຫ້ຂຶ້ນໄປເມືອງສິງກໍຍິນດີ.

ຄາວນັ້ນມີຂ່າວວ່າ ທໍ່ກ້ວາງມາ ໄດ້ແຜ່ອຳນາດເຂົ້າມາ ຍຶດເອົາເມືອງອູ ເໜືອ ອູໃຕ້ ບ້ານຫຼ້າ ເມືອງອ່າຍ ໝົດແລ້ວເຈົ້າຟ້າຊາບຂ່າວນັ້ນກໍຮ້ອນຮົນ ຈຶ່ງ ຕົກລົງ ຜູກໃນຕີຣ ເຂົ້າຮ່ວມກັບ ກຸງສີອະຍຸທິຍາຢູ່ທີ່ພູຄາ ໃນປີ ຈ.ກ( ) ເດືອນ ໑໒ ແຮມ ໑໒ ຄ່ຳ ເຈົ້າເມືອງພູຄາ ແລະ ເຈົ້າຫຼວງສຸລິຍະຜູ້ຕາງໜ້າ ເຈົ້າຊີວິດກຸງສີອະຍຸທິຍາ ກໍພາກັນຂຶ້ນເມືອ ເມືອງສິງ ປັກຫຼັກຮູບຊ້າງ ຢູ່ຕໍ່ໜ້າຫໍອູ ທີ່ຫໍເຈົ້າຟ້າເມືອງສິງນັບແຕ່ ເດືອນ ໗ ແຮມ ໗ ຄ່ຳປີ ຈ.ກ ( ) ເມືອງ ສິງໄດ້ຂຶ້ນຢູ່ຢູ່ຮ່ວມກັບ ເຈົ້າມອງຍາເທື່ອເຈົ້າຊີວິດກຸງສີອະຍຸທິຍາ ເຈົ້າເມືອງພູຄາ ກໍພາກັນກັບຄືນໄປ ພູຄາ ແລະ ເຈົ້າ[illegible]ສຸລິຍະກໍກັບຄືນໄປສຍາມ

## ອັງກິດຂຶ້ນ[illegible]ມ ເມືອງສິງ ຄັ້ງທີ ໑

ເດືອນ ໓ ແຮມ ໑໒ ຄ່ຳປີ ຈ.ກ ພ.ສ ໒໔໓໓ ອັງກິດຜູ້ຊື່ລອດແຮ ມີງຕັງພ້ອມດ້ວຍ ນາຍທະຫານ ໒ ຄົນຜູ້ນຶ່ງຊື່ມີສະເຕີອະເຊີ ຜູ້ສອງຊື່ມີສະໂກະແລະ ມີເຈົ້າໃຫຍ່ກຸງທັບຊື່ສາລະສີທິຍານຸການ ເຈົ້າຊຽງໃຫມ່ຊື່ ເຈົ້ານ້ອຍມະຫາໃຊ ເຈົ້າ ຊຽງຮາຍຊື່ເຈົ້າຣາຊະບຸດເຈົ້າຊຽງແສນຊື່ເຈົ້າຣາຊວົງ ພວກຄົນຄ່ຽນຄົນແຫ່ ສອງ ຮ້ອຍຄົນຊ້າງ ໔໐ ໂຕ ມ້າຕ່າງ ໔໐ ໂຕມ້າຂີ່ ໕໐ ໂຕງົວຕ່າງ ໕໐ ໂຕ ເຈົ້າຟ້າ ແລະປະຊາຊົນເມືອງສິງ ໄດ້ຮັບຕ້ອນຄາວນີ້ຢ່າງຄຶກຄື້ນ (ອັງກິດໄດ້ພັກຢູ່ເມືອງສິງ ສີ່ຫ້າວັນ (ເພື່ອປັກໝາຍເຂດແດນດິນ) ແຕ່ເມືອງຫຼວງທົວທາ ພູຄາ ເມືອງ ສິງ ຊຽງແຂງ ໃຫ້ເປັນດິນສຍາມເພາະເຈົ້າຟ້າເມືອງນ່ານ ອ້າງວ່າໄດ້ມາປາບ ໑໒ ພັນນາ (ແຕ່ປີ ຈ.ກ ໑໑໖໖) ຫັ້ນແລ້ວ ແລະໄດ້ເອົາກັບດິນສຍາມ ນັບແຕ່ ປີ ຈ.ກ ໑໒໕໓ ເມື່ອສຳເຣັດແລ້ວ ອັງກິດກໍອອກໄປທາງເມືອງພົງ ເຈົ້ານາຍ ໃຫ້ພ້ອມພວກໝູ່ກໍ ກັບຄືນໄປເມືອງໃຫ.

## ອັງກິດ ຖາມ ເຈົ້າຟ້າເມືອງສິງ ໑໑ ຂໍ້

ເມື່ອເດືອນ ໔ ອອກ ໑໐ ຄ່ຳ ຈ.ກ ໑໒໓໖ ອັງກິດຄືນນຶ່ງມາແຕ່ກູງ
ທິບ ຖາມເຈົ້າຟ້າ ໑໑ ຂໍ້ວ່າ.

໑. ເຈົ້າຟ້າມາຕັ້ງຢູ່ເມືອງສິງ ໄດ້ຈັກປີ.
ເຈົ້າຟ້າຕອບ ໄດ້ ໗ ປີ.

໒. ແຕ່ກ່ອນເຈົ້າລູກແຕ່ທີ່ໃດມາ
ຕ. ລູກເມືອງຍູ້ມາ

໓. ຢູ່ເມືອງຍູ້ໄດ້ຈັກປີ
ຕ. ໄດ້ຊາວເກົ້າປີ

໔. ກ. ຖ້າບໍໄປຢູ່ເມືອງຍູ້ເຈົ້າຈະໄປຢູ່ໃສ ເປັນສັງບໍຢູ່ເມືອງຍູ້ງກໍໃຫຣູ່
ຕ. ຖ້າບໍຢູ່ເມືອງຍູ້ ກໍຢູ່ເມືອງແຣະ ທີ່ນັ້ນກໍເປັນເມືອງຂຶ້ນຊຽງແຂງ.

໕. ເປັນຈັ່ງໃດ ເຈົ້າຈຶ່ງລະ ເມືອງຊຽງແຂງໃຫ້ຮ່າງ
ຕ. ເພາະມັນແຄບ ທັງບໍມີບ່ອນເຮັດນາຄືນກໍຫຼາຍ

໖. ເປັນເຫຕຸໃດເຈົ້າຈຶ່ງລະເມືອງຍູ້ເສັຍ
ຕ. ແຕ່ກ່ອນເມືອງນ່ານກັບຊຽງແຂງຜິດກັນ ທັງເມືອງນ່ານຈະມາກວາດ
ເອົາໄປ ຈຶ່ງມາຕັ້ງຢູ່ເມືອງສິງ.

໗. ເຈົ້າເຫັນສັງສຳຄັນທີ່ເມືອງຍູ້ ຈຶ່ງໄປຕັ້ງຢູ່ເມືອງຍູ້
ຕ. ເມືອງຍູ້ ມີວຽງມີຄູອ້ອມຮອບເມືອງດີກວ່າເມືອງແຣະ

໘. ເຈົ້າເຫັນອັນໃດສຳຄັນຢູ່ທີ່ເມືອງສິງ ຈຶ່ງຈາກເມືອງຍູ້ມາ
ຕ. ເມືອງຍູ້ຍັງຂຶ້ນກັບຊຽງແຂງ ທັງເມືອງນ່ານມາກວາດເອົາໄປຈຶ່ງມາຕັ້ງ
ຢູ່ເມືອງສິງ.

໙. ຍາມເຈົ້າບໍມາຕັ້ງຢູ່ເມືອງສິງນີ້ ໃຜມາຕັ້ງຢູ່ກ່ອນ.
ຕ. ເມືອງສິງບໍມີຄົນຢູ່ ເປັນເມືອງຮ່າງ.

໑໐. ເມືອງສິງມີໃຮ່ນາຢູ່ກິນດີ ຈັ່ງໃດບໍລູກຊຽງແຂວງມາຕັ້ງຢູ່ກ່ອນ.
ຕ. ແຕ່ກ່ອນຫມ່ອມພີ່ຫມ່ອມກາງ ມາຕັ້ງເປັນບ້ານເມືອງຢູ່ແລ້ວເມືອງນ່ານ
ມາຟັນແລະກວາດເອົາຄືນໄປ ບາງພ່ອງລັກຫນີຄືນມາຕັ້ງຢູ່ເປັນບ້ານເລກ
ເມືອງນ້ຮຢູ່ ເຈົ້າເມືອງລືມ ຊ້ຳມາຕີຈຶ່ງມາຕັ້ງຢູ່ເມືອງສິງເວລານັ້ນບໍໄດ້.

໑໑. ກ່ອນເຈົ້າຈະມາຕັ້ງຢູ່ເມືອງສິງນີ້ ໄດ້ໄປຂໍອານຸຍາດຈາກເຈົ້າຊີວິດນ່ານແລ້ວ

ຈື່ງມາຕັ້ງຢູ່ຫຼີ

ຕ.ກ່ອນຈະມາຕັ້ງກໍໃດ້ເອົາເຄື່ອງປັນນະການມີນໍ ວາ ມ້ານື່ງຕົວໃປສືບໃນຕຣີ ກັນດີແລ້ວ ເຈົ້າຊີວິດມ່ານກໍເອົາຊ້າງສືບຮັກໃຫ້ຜູ້ນຶ່ງຊື່ຜູ້ບານ ເມືອງສິງ ໃດ້ເຂົ້າຢູ່ຮ່ວມກັບ ກຸງທິພແລະ.

## ອັງກິດ ມາຢາມເມືອງສິງ ຄັ້ງທີ ໒

ເມື່ອປີຈ.ກ ໑໒໕໕ ເດືອນ ໕ ແຮມ ໘ ຄ່ຳ ນາຍທະຫານອັງກິດສອງຄົນ ຜູ້ນຶ່ງຊື່ ສະຕະລິງຈິກະໂປ ຜູ້ນຶ່ງຊື່ກຣິດ ພ້ອມດ້ວຍທະຫານ ຮວມບ່າວນາຍ ໕໐ ຄົນ ພ້ອມມີເຈົ້າມ່ານຄົນນຶ່ງເປັນຜູ້ໃຫຍ່ ຊື່ວ່າ (ຫວູ່ນທອກະ) ເຈົ້າຫວູ່ນທອກະນີ້ ກ່າວວ່າໃດ້ຮົບກັບເຈົ້າຟ້າມາແຕ່ຄັ້ງແຕ່ເດີມແລ້ວແຜ່ນດິນຊຽງແຂງກໍຂຶ້ນກັບມ່ານ ເປັນສັງຈຶ່ງໃປຂຶ້ນກັບກຸງທິພອະຍຸທິຍາ ການຂຶ້ນກັບອະຍຸທິຍາ ພາໃຫ້ລະປະເພນີ ບ້ານເມືອງເຮົາໃປ ຂໍ້ເຫັນດີໃຫ້ເຈົ້າຟ້າ ເຣັດດອກໄມ້ເງິນດອກໄມ້ຄຳ ເອົາ ເມືອຖວາຍເຈົ້າຊີວິດມ່ານ ຈະດີກວ່າ ໃຫ້ຣີບຣ້ອນເທີ້ນ.

ເຈົ້າຟ້າຕອບວ່າ ບໍ່ຊາງຈະຂານຄຳ ເຈົ້າຫວູ່ນທອກເທື່ອເພາະເຈົ້ານາຍ ເມືອງມ່ານ ເຈົ້າບັງກອກ ແລະ ອັງກິດ ລ້ວນແລ້ວແຕ່ເປັນເຈົ້ານາຍຜູ້ໃຫຍ່ ມາ ບອກເລົ່າໃຫ້ຂຶ້ນກັບບັງກອກ ຈຶ່ງໃດ້ຕິດຕໍ່ກັບບັງກອກ ບໍ່ພໍປີຊຳຈະໃຫ້ໃປຂຶ້ນກັບອະ ລວງຍະ ເມືອງມ່ານນີ້ຍັງຄິດເບິ່ງກ່ອນ ຟ່າຍຫວູ່ນທອກກໍຍັງບອກໃຫ້ໃປຂຶ້ນກັບມ່ານ ຢູ່ຕິດໆ ເຈົ້າຟ້າກໍບໍ່ຕົກລົງຢູ່ຕໍ່ມາເມື່ອປີ ຈ.ກ ໑໒໕໖ ຕົວອັງກິດເຣັດຫນັງສືມາ ເຖິງເຈົ້າຟ້າເມືອງສິງ ຊຽງແຂງ ໓໙ ໃບ ເປັນພາສາມ່ານ ໑໓ ໃບ ພາສາ ປ່ອງ ໑໓ ພາສາລື້ ໑໓ ໃບມີຄວາມ ໃນຫນັງສືນັ້ນວ່າ ຕັ້ງແຕ່ປີຈ.ກ. ໑໒໕໖ ນີ້ເມືອຫນ້າ ເມືອງຊຽງແຂງ ເມືອງສິງ ແລະທົວເມືອງຕ່າງໆທີ່ຢູ່ດິນຊຽງແຂງ ຕ້ອງໃດ້ຂຶ້ນກັບ ອັງກິດ (ເຈົ້າອະຈວຍຍະມ່ານ) ບອກໃຫ້ເອົາຫນັງສືນັ້ນ ແຈກ ຢາຍໃຫ້ຂ້າບ້ານໄພ່ເມືອງຊາບ ເຈົ້າຟ້າຂືນບໍ່ໃດ້ ກໍໃດ້ແຈກຢາຍໃປ.

ຢູ່ມາເຖິງປີ ຈ.ກ ໑໒໕໗ ຕົງເດືອນ ໗ ລົງ ໖ ຄ່ຳ <u>ຫນັງສືຫວູ່ນທອກ ມາເຖິງເຫນືອ</u> ສນາມເມືອງສິ່ງວ່າ ໃຫ້ເຈົ້າຟ້າໃປຮັບ ທີ່ຊຽງລາບ ຖ້າເຈົ້າ ຟ້າມາບໍ່ໃດ້ ໃຫ້ຂູນຫຼວງມາຮັບ ເຈົ້າຟ້າຈຶ່ງແຕ່ງໃຫ້ ເຈົ້າພຣາຫຼວງວັນນະວົງ ໃປ ຮັບເອົາຫວູ່ນທອກ ເຂົ້າມາ.

ສ່ວນເຈົ້າຟ້າ ກໍໜີຈາກວັງ ໄປລີ້ຢູ່ບ້ານ ຫົວຕູຍ ຟາກໜ້ານ້ຳແມ່ຂອງ ເມື່ອໜ່ວຍທອກະເອົາທະຫານ ໓໐໐ ຄົນເຂົ້າເຖິງເມືອງສິງກໍສ້າງຄ້າຍ ແປງດ່ວນ ຢູ່ທີ່ເໜືອບ້ານນ້ຳແກ້ວຫຼວງ ທັງແຕ່ງໃຫ້ທ້າວຂູນ ໄປເຊີນເຈົ້າຟ້າ ມາຫາ ໄປເຊີນຫຼາຍງຄັ້ງເຈົ້າຟ້າກໍບໍ່ມາ ບອກໃຫ້ທ້າວຂູນ ເກັບເງິນຊ່ວຍໃຫ້ ສາມພັນແຖບ ເຈົ້າຟ້າກໍບໍ່ໃຫ້ເກັບ ໜ່ວຍທອກະ ຄຽດ ເອົາທະຫານໄປຮ້ອມວັງ ຈັບເອົາທ້າວຂູນຜູ້ໃຫຍ່ໄປຂັງ ພວກທີ່ຖືກອັງກິດຂັງມີ ເຈົ້າພຍາຫຼວງພິມວົງ ພຍາຫຼວງພິມປັນຍາ ພຍາຫຼວງພາວະດີ ພຍາຫຼວງຜາວັງ ພຍາຫຼວງສິທິວົງຣາຊ ພຍາໄຊວົງ ພຍາຫຼວງລັມະຈັກ ຄົນທ້າວຂູນທັງຫຼາຍ ຖືກກັກຂັງດັ່ງນັ້ນພຍາທະ ນັນໄຊ ກໍໄປໄຫວ້ ເຈົ້າຟ້າຕາມການ ເຈົ້າຟ້າກໍບອກວ່າໃຫ້ອົດເອົາ ຢ່າໃດ້ ເອົາເງິນໃຫ້ເຂົາ ເປັນເດັດຂາດ.

ຍາມນັ້ນ ຟ່າຍຟຣັ່ງເສັສ ກໍແຜ່ອຳນາດ ຂຶ້ນມາເຖິງພູຄາ ນ້ຳທາ ແລະ ຊຽງຂອງ ເຈົ້າຟ້າຊາບຂ່າວ ກໍແຕ່ງຄົນເອົາໜັງສືໄປຫາຟຣັ່ງເສັດ ຜູ້ຊື່ກອມມີແຊວິແຢ ທີ່ເມືອງຫຼວງນ້ຳທາ ກອມມີແຊ ຊາບໃຈຄວາມຈົດໝາຍເຈົ້າຟ້າ ຄັກແລ້ວ ກໍຕອບວ່າຈະຊ່ວຍ ໃຫ້ເຈົ້າຟ້າ ໃດ້ເພິ່ງບາຣະມີ ຂອງຟຣັ່ງເສັດ ເຈົ້າຟ້າດີໃຈກໍລອບລັກ ໄປເພິ່ງຟຣັ່ງເສັດ ທີ່ເມືອງຫຼວງນ້ຳທາ.

ສ່ວນທ້າວຂູນທີ່ຖືກກັກຂັງ ກໍຖືກອັງກິດຮ້າຍໃຫ້ທຸກວັນວ່າ ຖ້າບໍ່ໃດ້ເງິນ ສາມພັນແຖບມາໃຫ້ ຈະເອົາລົງໄປຕອງກີເມືອງມ່ານໝົດວ່າຊັ້ນ ນອກຈາກຮ້າຍ ໃຫ້ພວກຖືກກັກຂັງແລ້ວ ອັງກິດຍັງໃດ້ເອົາໄຟຈູດເຜົາຫໍຄຳ ຂອງເຈົ້າຟ້າໄໝ້ໝົດ ແລ້ວອັງກິດຈຶ່ງເວົ້າຄູ່ ບັງຄັບໃຫ້ບ້ານນ້ຳແກ້ວຫຼວງ ເອົາເງິນສາມພັນແຖບມາໃສ່ ໃຫ້ອັງກິດວັນນີ້ໃຫ້ໃດ້ ຖ້າບໍ່ໃດ້ຈະເອົາໄຟຈູດບ້ານນ້ຳແກ້ວຫຼວງ ໃຫ້ໄໝ້ໝົດ ບ້ານນ້ຳແກ້ວຫຼວງ ຢ້ານກົວອັງກິດຈູດບ້ານແຮ້ວ ພຍາທິພະຊາງ ບ້ານນ້ຳແກ້ວ ຫຼວງ ຈຶ່ງເອົາເງິນຂອງສ່ວນຕົວ ອອກໃຫ້ອັງກິດສາມພັນແຖບ ຄັນອັງກິດໃດ້ ເງິນແລ້ວ ຈຶ່ງປ່ອຍທ້າວຂູນທີ່ຂັງນັ້ນ ອອກຈາກຄຸກຂັງໝົດອັງກິດໃດ້ເງິນແລ້ວ ກໍມອບໃຫ້ ທ້າວຂູນ ແປງຜີບ້ານຜີເມືອງແລະສ້າງແປງຄ້າຍດ່ວນທະຫານຂອງ ມັນໄວ້ທີ່ເມືອງສິງ ແລະ ສ້າງຖາງທາງ ໄປເຖິງຊຽງກົກ ຟ່າຍເຈົ້າຟ້າ ທີ່ຢູ່ ເມືອງນ້ຳທາກໍຮ້ອງຂໍຕໍ່ຟຣັ່ງເສັດ ຂໍໃຫ້ຟຣັ່ງເສັດ ກັບອັງກິດ ແບ່ງປັນເຂັດນ້ຳແດນ ດິນ ດ້ວຍຂໍເອົາດິນເມືອງສິງຂຶ້ນກັບຟຣັ່ງເສັດ.

ກາລະຄາວນັ້ນ ແມ່ນພວກມີອຳນາດ ກຳລັງແຜ່ອຳນາດ ເອົາຫົວເມືອງນ້ຍທັງຫຼາຍ ເຂົ້າເປັນຫົວເມືອງຂຶ້ນ ເປັນຂ້ຍຂ້າຂອງເຂົາ ຊຽງແຂວງ ເມືອງສິງ ຖືກຊາດທີ່ມີອຳນາດມາບັງຄັບຫນີບເຕັງ ໓ ຄັ້ງ ຄື ໑ (ພະມ້າ ພ່ານ) ໒ (ສຢາມໃທຍ) (໓ ອັງກິດ ) ການທຳຄວາມຂູ່ເຂັນຕໍ່ເມືອງສິງຫຼາຍຄັ້ງ ແມ່ນອັງກິດ.

<u>ເມືອງສິງ ຂຶ້ນກັບ ຝັ່ງເສັດ</u> ປີ ຈ.ກ ໑໒໕໘

ດ້ວຍຄວາມອ່ອນວອນ ຂອງເຈົ້າຟ້າ ກອມມີແຊ ຈິງຮຽນຣາຊການ ຝັ່ງເສັດ ຣາຊການຈຶ່ງໃຫ້ ທ່ານກອມມັງກີ່ງ ຜູ້ຮັກສາຣາຊການ ທີ່ຫຼວງພະບາງ ເອົາກອງທະຫານ ຂຶ້ນມາເຖິງເມືອງສິງ ເດືອນ ໗ ອອກ ໑໓ ຄ່ຳປີ ຈ.ກ ໑໒໕໖ ຕົວ ອັງກິດຊາບວ່າ ກອງທະຫານຝັ່ງເສັດ ຖາມຄວາມເຫັນວ່າ ເມືອງສິງ ຈະເຫັນດີເຂົ້າກັບ ອັງກິດ ຫຼື ຝັ່ງເສັດ ເຈົ້າຟ້າພ້ອມຣາສດອນທັງຫຼາຍ ເຫັນດີເຂົ້າກັບຝັ່ງເສັດ ເມືອງສິງຈຶ່ງໃດ້ຂຶ້ນກັບຝັ່ງເສັດ.

ອັງກິດ ກັບຈາກເມືອງສິງ ເດືອນ ໗ ເພັງ ປີ ຈ.ກ ໑໒໕໗ ນັບວ່າອັງກິດຢູ່ເມືອງສິງນານ ໑ ປີ.

ເດືອນ໘ ອອກໃຫມ່ ໑໐ ຄ່ຳຝັ່ງເສັດຈະສຣອງໃຊຍທີ່ໃດ້ເມືອງສິງເປັນເມືອງຂຶ້ນຝັ່ງຈຶ່ງເອົາເຈົ້ານາຍເມືອງນ້ຳທາ ຂຶ້ນໄປພ້ອມຮ່ວມ ທຳບຸນໃຫຍ່ ຢູ່ທີ່ເມືອງສິງໃຫ້ພົລະເມືອງຊຸມ ຊາບວ່າເມືອງສິງໃດ້ຂຶ້ນກັບຝັ່ງເສັດ ນັບແຕ່ເດືອນ ໘ ເພັງປີ ຈ.ກ ໑໒໕໘ ນີ້ໄປ ຢູ່ມາເຖິງປີ ຈ.ກ ໑໒໖໒ ຕົວເດືອນຈຽງອອກໃຫມ່ ໑໓ ຄ່ຳເຈົ້ານາຍທ້າວຊຸມ ແຕ່ງໃຫ້ຄົນບ້ານເມືອງ ໃປແຜ້ວຖາງຂອງທາຕຸເພື່ອຈະໃດ້ ຂຶ້ນໄຫວ້ທາຕຸ ວັນເດືອນຈຽງເພັງ ຕາມປະເພນີເມື່ອຄືນທັງຫຼາຍແຜ້ວຖາງຢູ່ນັ້ນ ໃດ້ຍິນສຽງຄາງຢູ່ໃນທາຕຸຈຶ່ງພາກັນເອົາຂ່າວ ເຫດການນັ້ນຂຶ້ນໄຫວ້ເຖິງເຈົ້າຟ້າ ອິນມື່ງ ເມືອງລວງ ເມືອງຣຳ ເມືອງພົງ ມາໃຫ້ຂ່າວວ່າ ໃນຄືນນັ້ນ ເຫັນດາວຄວັນຂຶ້ນມາງເມືອງສິງ ຄົນຊາບຂ່າວນັ້ນ ເຈົ້າຟ້າກໍສັ່ງໃຫ້ທ້າວຊຸມປ່າວເຕີນ ບ້ານເມືອງ ໃຫ້ພາກັນຊຳລະບ້ານເມືອງ ເພື່ອເວັ້ນໄພຍ ໃດ້ຢູ່ດີມີສຸກ

ເຖິງປີ ຈ.ກ ໑໒໖໓ ເດືອນ ໑໑ ອອກ ໑໒ ຄ່ຳ ເຈົ້າຟ້າກໍບັງເກີດອາພາດ ອອກຕຸ່ມສຸກທີ່ຄໍ ອາການຫນັກ ບ້ານເມືອງພາກັນມາທູນຂວັນ ບາສີເຈົ້າ

ຟ້າ ເຖິງເດືອນ ໑໑ ລົງ ໓ ຄ່ຳອາພາທິກໍຫນັກເຂົ້າ ເຖິງເດືອນ ໑໑ ນັ້ນລົງ ໑໔ ຄ່ຳ ຍາມ ໕ ໂມງເຊົ້າເຈົ້າຟ້າກໍສິ້ນພຣະຊົນ ສວັນນະໂຄຕ ພຣະຊົນອາຍຸຂອງພຣະອົງຄ໌ໄດ້ຜົລ ປີທີ່ສວັນນະໂຄຕ ເຈົ້າຟ້າອົງຄ໌ນີ້ ຕາມສນິຖານຄົງແມ່ນເຈົ້າຫນໍ່ຄຳ ນ້ອງຂອງເຈົ້າຫນໍ່ແກ້ວ ດ້ວຍວ່າເຈົ້າຫນໍ່ແກ້ວ ໄດ້ມາເປັນເຈົ້າຟ້າຊຽງແຂງດ້ວຍຄວາມເຫັນດີແລະນັ້ບຖືຂອງທ້າວຂູນຄົນເມືອງຊຽງແຂງ ພ້ອມກັນຂໍເອົາມາເປັນເຈົ້າຟ້າ ແລະ ຕັ້ງພຣະນາມວ່າ ເຈົ້າຂະຕິຍະວົງສາ ເວລາເຈົ້າຫນໍ່ແກ້ວມາເປັນເຈົ້າຟ້າຊຽງແຂງນັ້ນ ເຈົ້າຫນໍ່ຄຳ ຍັງຄ້າງຢູ່ເມືອງຍູ້ຈຶ່ງໄດ້ສຸກເມືອງຍູ້ມາຕັ້ງເມືອງສິງນີ້.

## ຣາຊການ ເຈົ້າຟ້າອົງຄຳ

ເມື່ອປູງສິ່ງສການ ເຈົ້າຟ້າສຣີຫນໍ່ເປຈົງກຸລະແຜ້ວຣາຊການຊັ້ນສູງ ຣ່ຳໂນ້ຍກໍໄດ້ຣຽກເອົາເຈົ້າອົງຄຳອົງຄ໌ເປັນລູກ ແລະ ເຈົ້າມະຫາສີຣຈອມເມືອງຊຽງຮຸ້ງອົງເປັນອ້າຍເຂີຍລົງໄປຣ່ຳໂນ້ຍ ຣັຖບານຝຣັ່ງເສັດ ຈຶ່ງຕັ້ງໃຫ້ເຈົ້າອົງຄຳ ລູກກົກເປັນເຈົ້າຟ້າແທນພໍ່ ໃຫ້ເຈົ້າຫມ່ອມທິພະມະນີຄຳ ຕົນນ້ອງໃຫ້ເປັນ ອຸປະຣາຊາທ່ານກອມມີແຊສູຣິເຢ ຜູ້ຮັກສາການທີ່ຊຽງຂອງ ແລະ ທ່ານແອນສະປອກເຕີ ຜູ້ຮັກສາເມືອງສິງຈຶ່ງເອົາໃຊຣະບັຕຖາຕັ້ງເຈົ້າຟ້າແລະອຸປະຣາຊມານັ້ນກໍພ້ອມກັນທ້າວຂູນບ້ານເມືອງ ອຸປະພິເສັດ ເຈົ້າຟ້າອົງຄຳ ແລະອຸປະຣາຊາຫມ່ອມທິພະມະນີຄຳໃນປີ ຈ.ກ ໑໔໙໕ ເດືອນ ໔ ເພັງ ກ.ຕ. ໑໓໐໔ ຍາມນັ້ນອາຍຸ ເຈົ້າອົງຄຳໄດ້ ໓໐ ປີ ຫມ່ອມທິພະມະນີຄຳໄດ້ ໔໔ ປີ.

ຢູ່ມາເຖິງປີ ຈ.ກ ໑໔໙໙ ກ.ຕ. ໑໓໐໖ ເດືອນ ໒ ເຈົ້າຟ້າແລະກອມມີແຊ ກໍພາກັນຈັດຕັ້ງຣະບຽບໃຫມ່ ດ້ວຍໃຫ້ຫມ່ອມທິພະມະນີຄຳ ອຸປະຣາຊາ ເປັນຜູ້ບໍຣິຫານການແຜ່ນດິນຮອງພຣະອົງຄ໌ ແລະ ມີເຈົ້າຕົນພຣະນາຂວາ ນາຊ້າຍ ຜູ້ສຳຄັນເປັນກົມມະການທີ່ປຶກສາ ແລະ ຕັ້ງ ເສນາອາມາດ ຂ້າຣາຊການດັ່ງຕໍ່ໄປນີ້.

| | | | |
|---|---|---|---|
| ຕັ້ງໃຫ້ | ພຍາຫຼວງສີຫິວົງຣາຊ | ເປັນຫົວຫນ້າກົມມະນາ | ຝ່າຍຂວາ |
| " | ເຈົ້າພຍາຫຼວງວັນນະວົງ | " | ຝ່າຍຊ້າຍ |
| " | ພຍາຫຼວງກັມທະວະດີ | ເປັນນາຍຄັງ | |
| " | ພຍາຫຼວງແອ່ນຄຳ | ເປັນກັມມະການ | |
| " | ພຍາຫຼວງຄຳລື | ເປັນນາຍທະຫານ ໃນວັງ | |

ຕັ້ງອັຕຣາ ເງິນເດືອນ ດັ່ງຕໍ່ລົງໄປນີ້

| | | | |
|---|---|---|---|
| ຂຸນກົມມະນາຝ່າຽຂວາ ຜູ້ໄດ້ຮັບເງິນເດືອນງລະ | | | ໑໔ ກີບ |
| ຂູນກມະນາ ຝ່າຽຊ້າຽ | | " | ໙ ກີບ |
| ຂູນພຣາຫຼວງ ໃນກົມ ຜູ້ໃດ | | " | ໖ ກີບ |
| ຂູນພຣາ ໃນກົມ | | " | ໘ ກີບ |
| ຂູນຣາຊາ | " | " | ໓ ກີບ |
| ຂູນແສນ | " | " | ໔ ກີບ |
| ຂູນຫານ | ໘໐ ຄົນ | " | ໔ ກີບ |
| ເຈົ້ານາງຫຼວງ ແມ່ເຈົ້າຟ້າ | | | ໑໔ ກີບ |

ນາງເທວີ ແລະ ນາງສູນັນທານ້ອງເຈົ້າຟ້າແລະແມ່ເຈົ້າອຸປະຣາຊາ ຜູ້ລະ ໙ ກີບ

ໃຫ້ເກັບເງິນສ່ວຽຕົວເລກ ນຳຊາຽສກັນ ອາຍຸ ໔໐ ປີຂຶ້ນໄປຈະມີເມັຽຫຼືບໍ່ມີກໍຕາມ

ກ. ຖ້າຜູ້ໃດບໍ່ໄດ້ຢູ່ສຶກເຮືອບໍ່ໄດ້ໄປການ ຫ້ອງເສັຽ ໘ ກີບ

ຂ. ຜູ້ໃດ ໄດ້ຢູ່ຈຶກເຮືອ ໄປການ ໔໐ ວັນ ໔ ກີບ

ເງິນເກັບໄດ້ເທົ່າໃດ ຍົກໃຫ້ຝູ່ງ ໙໐໐ ກີບ

ຍັງເຫຼືອເທົ່າໃດ ແບງ ໓ ພູດໄວ້ເປັນເງິນຄັງເມືອງ ໑ ພູດ ສອງພູດ ເຈົ້າຟ້າແລະອຸປະຣາຊາ ປັນກັນ.

ຣະບຽບນີ້ ແມ່ນເຈົ້າຟ້າ ແລະ ກອນມີແຊຊູລີແຢໄດ້ຫາງແຕ່ງໄວ້ຫມັ້ນຄົງ.

ໃນປີນັ້ນ ມີພຣາຫຼວງເຄົ້າ ພຣາຫຼວງຜາສາດ ຄົນເມືອງພົງດຽວກັນ ໄດ້ຜິດກັນດ້ວຽການເຫຼັ້ນເບັ້ຽ ເລີຽຫ້າງໃພ່ໃທເມືອງຣົບຟັນກັນເປັນເສິກ ພຣາຫຼວງເຄົ້າ ຈຶ່ງພາເອົາພັກພວກ ໆ ຮ້ຽຄອບຄົວ ຫນີເຂົ້າມາເຖິງ ຝູ່ງເສັດ ແລະເຈົ້າຟ້າເມືອງສິງ ຈຶ່ງໃຫ້ພຣາຫຼວງເຄົ້າຢູ່ທີ່ດ້າວຊຽງແລ.

<u>ເຈົ້າອຸປະຣາຊາ ຫມ່ອມທິພະມະນີຄຳ ລັກຫນີອອກເມືອງສິງ</u> ເນື່ອງດ້ວຽເຈົ້າຟ້າຜູ້ນີ້ ໃຊ້ອຳນາດ ຕາມອັທະຍາໃສ ຂອງຕົນຕໍ່ນ້ອງ ດ້ວຽບໍ່ໄດ້ປຶກສາຫາລືກັບໃຜ ຢາກຮ້າຽດ່າວ່າຜູ້ໃດກໍຮ້າຽຄັນຈະຮ້າຽໃຫ້ອຸປະຣາຊາຜູ້ນ້ອງ ກໍຮ້າຽໃນເມື່ອເສນາອາມາດມາຮວມຖ້ວນຫນ້າກັນແລ້ວ ກໍຮ້າຽດ່າ ປະຈານຫນ້ານ້ອງ ດັ່ງເປັນຂ້ຽຂ້າເຈົ້າ ອຸປຣາຊມີຄວາມດູຮ້າຽ ເຫັນວ່າ ພີ່ບໍ່ຮັກບໍ່ແພງຕົນດັ່ງນີ້ ກໍຊອກຫາຊ່ອງທາງຫນີຈາກພີ່

ຈຶ່ງແຕ່ງໃຫ້ພຍາຫຼວງນັນທະສຽນ ແລະຂະຫນານພິມປັນຍາ ຖືຈົດຫມາຍເມືອຖວາຍ
ເຈົ້າຟ້າຊຽງຕູງ ອົງເປັນພີ່ເອີ້ຍມີ[illegible]ມວ່າ ເນື່ອງເຈົ້າຟ້າອົງຄໍາຜູ້ພີ່ ບໍຮັກ
ບໍແພງ ຈຶ່ງຢາກຊວນທ້າວຊູນ ຜູ້ສມັກຮັກໃຄ່ ຫນີມາເພິ່ງບາຣາມີ ເຈົ້າຟ້າຊຽງ
ຕູງຊຶ່ງມີນາມວ່າ ຣັຕະນະໂຊຕິ ຍິນດີຮັບເອົານ້ອງ ທີ່ຈະມາເພິ່ງເຢັນ ຈຶ່ງຕອບ
ວ່າຖ້ານ້ອງຈະມາ ກໍໃຫ້ມາເຖິງພີ່ ເພື່ອປຶກສາກັນ ສົມຄວນມັກຢູ່ບ່ອນໃດ ຈຶ່ງ
ຄ່ຍໃປຢູ່ ເມື່ອຄົນໃຊ້ກັບຄືນມາເຖິງ ໃດ້ຮັບຄໍາຕອບຂອງພີ່ເອີ້ຍ ແລ້ວກໍຍິນດີຈຶ່ງ
ຮຽກເອົາທ້າວຊູນຜູ້ທີ່ຮັກໃຄ່ ຈໍາສມັກໃປນໍາກໍໃຫ້ຫ້າງແຕ່ງເຄື່ອງ ແລະອານັດ
ສົມຍາກັນ ຈະແຕ່ງອຸບາຍ ຂໍອານຸຍາດຈາກເຈົ້າຟ້າ ໃປໃຫ້ວິທາຕຸຫີນຟູ ໃນປີ
ຈ.ກ ໑໔ຜິກ ເດືອນ ກ ອອກ ໕ ຄໍາ ຜູ້ທີ່ຕົກລົງໃປນໍາກັນກັບ ເຈົ້າທິພະມະ
ນິຄໍາ ຄາວນັ້ນມີພຍາຫຼວງພາວະດີ ເຈົ້າພຍາຫຼວງວັນະວົງ ພຍາແຂກໃຊສານ
ແສນສົງຄໍາ ເດືອນ ກ ອອກ ໕ ຄໍາ ໃປຂໍອານຸຍາດຈາກເຈົ້າຟ້າ ໙ ຄໍ່າຈຶ່ງ
ພາກັນເອົາຄອບຄົວລູກເມັຽໃພ່ນັ້ນ ອອກເມືອງສິງໃປ ແຕ່ສ່ວນເມັຽພຍາແຂກ
ໃຊສານ ບໍຢາກໃປນໍາຜົວກໍ່ດີ ໃຂ້ ພຍາແຂກໃຊສານຈຶ່ງບໍໃດ້ໃປພອກທາວຊູນ
ຂ້າໃພ່ຊາຍຍິງ ທີ່ໃປຕາມເຈົ້າອຸປະຣາຊາ ຫມ່ອມທິພະມະນິຄໍາຄາວນັ້ນ ທັງ
ຫມົດ ໔໐ ຄົນ ຄັນເຈົ້າຟ້າແລະຟຣັ່ງ ຊາບວ່າອຸປະຣາຊ ເຈົ້າຫມ່ອມທິພະມະ
ນິຄໍາ ລັກຫນີແລ້ວ ກໍຮຽກເອົາທ້າວຊູນຂ້າໃພ່ມາໃຕ່ຖາມ ເມັຽພຍາແຂກໃຊ
ສານ ໃຫ້ການວ່າຂ້ນຽຜົວເມັຽກໍຕົກລົງວ່າຈະໃປຕາມ ແຕ່ຂ້ນຽໃຂ້ຈຶ່ງບໍໃດ້ໃປ
ເຈົ້າຟ້າຊາບວ່າດັ່ງນັ້ນຈຶ່ງໃຫ້ກັກຂັງ ພຍາແຂກໃຊສານໄວ້ແລ້ວ ໃຫ້ຝັ່ງຕີສາຍ
ໃປຫາ ກອມມີແຊ ທີ່ຊຽງຂອງ ກົມມິແຊຊານ ຈຶ່ງຕີສາຍສັ່ງໃຫ້ແຕ່ງ ພຍາ
ແຂກໃປເຊີນ ເຈົ້າອຸປະຣາຊຄືນມາ ເຈົ້າຟ້າແລະຕາລດກເມືອງສິງ ໃດ້ຮັບ
ສັ່ງຂອງກົມມິແຊ ກໍໃຫ້ເອົາພຍາແຂກອອກຄຸກ ແລະແຕ່ງໃຫ້ໃປຣາທະນາ ເຈົ້າ
ອຸປະຣາຊໃຫ້ຄືນມາ ພຍາແຂກໃຊສານກໍເຣວວັນເຣວຄືນ ໃປຕາມຫາເຈົ້າອຸປະ
ຣາຊຫມອມທິພະມະນິຄໍາຈຶ່ງໃດ້ເຊີດທີ່ ສົບນ້ໍາຊຽງຄໍາ ພຍາແຂກກໍເອົາຫນັງ
ສືເຈົ້າຟ້າໃຫ້ອຸປະຣາຊ ແລະ ຣາທະນາໃຫ້ກັບຄືນເມືອງສິງ ເຈົ້າອຸປະຣາຊ
ກໍບໍກັບຄືນເປັນເດັດຂາດ ເຫັນວ່າອຸປະຣາຊບໍກັບຄືນດັ່ງນັ້ນພຍາແຂກໃຊສານ
ກໍເລີຽໃປຕາມເຈົ້າອຸປະຣາຊ ເມື່ອເຖິງຊຽງຕູງແລ້ວ ເຈົ້າຫມອມທິພະມະ
ນິຄໍາ ເຂົ້າຟ້າເຈົ້າຟ້າຊຽງຕູງ ແລ້ວກໍກັບຄືນມາຢູ່ເມືອງຢູ້.

<u>ພຣາຫຼວງຄຳລີ ຫນີຈາກເມືອງສິງ</u>

ດ້ວຍນິໃສຫຍັ້ມຫວດ ຂອງເຈົ້າຟ້າ ທີ່ເຄີຍໃຊ້ຕົ້ນອງຊາຍກໍຍັງເອົາມາ ໃຊ້ຕໍ່ຂູນ ພຣາຫຼວງຄຳລີ ຜູ້ເປັນເຈົ້າຂູນທານໄດ້ມີຄວາມຂັດກັນກັບເຈົ້າຟ້າງ ໂທຫຣ້າຍຈ້າຂ້າຈາຕີ ພຣາຫຼວງຄຳລີລັກຫນີ ຈາກເມືອງສິງໃປ ໃນປີ ຈ.ກ ໑໔໖໙ ( ) ດ້ວຍຄວາມຄຽດແຄ້ນ ຂອງພຣາຫຼວງຄຳລີ ຈຶ່ງໄດ້ຄິດກະບົດ ຕໍ່ເຈົ້າຟ້າ ຊອກຫາຈ້າງຜູ້ຮ້າຍ ທີ່ມີຄວາມເກັ່ງກ້າສາມາດ ໃຫ້<u>ມາລອບຂ້າເຈົ້າ ຟ້າ</u> ໄດ້ຄົນຮ້າຍ ໘ ຄົນ ມີທ້າວຄໍ່ມີໄຟ ເປັນຜູ້ເກັ່ງກ້າກວ່າຫມູ່ ເປັນຜູ້ນຳຫນ້າ ຜູ້ຮ້າຍນັ້ນ ໃນຄ່ຳວັນເດືອນ ໔ ແຣມ ໑໔ ຄ່ຳ ປີ ຈ.ກ ໑໔໗໐ (ກ.ຕ ໑໙໐໘) ເວລາຫົວຄ່ຳຄືນພວກຜູ້ຮ້າຍນັ້ນ ໄດ້ລັກລອບເຂົ້າໄປເຖິງທີ່ເຈົ້າຟ້າ ແມ່ນເຈົ້າຟ້າ ເຫວີຍເຂົ້າ ສ່ວນພວກຜູ້ຮ້າຍ ໃຫ້ແຮ້ຢູ່ຕີນໄດທີ່ ໗ ຄົນເພື່ອສະກັດກັ້ນ ພວກ ຈະມາຊ່ວຍເຈົ້າຟ້າ ດັ່ງທ້າວຄໍ່ມີໄຟຜູ້ເກັ່ງກ້າກວ່າຫມູ່ນັ້ນ ຖືເອົາປືນແລະງ້າວ ຂຶ້ນໃປເຫນືອທີ່ ແປະປະຕູ ເອົາປືນຍິງເຈົ້າຟ້າ ແລະຖອດງ້າວໂດດເຂົ້າໃປ ເພື່ອຈະຟັນເຈົ້າຟ້າງ ກໍໂດດຈາກບ່ອນນັ່ງເຫວີຍເຂົ້າ ດ້ວຍຕົວເປົ່າອອກຮັບທັນທີ ເຈົ້າຟ້າໄດ້ເຢັບໃສ່ອາງນ້ຳລ້າງມື ທີ່ວາງໃວ້ນ່ພາເຫວີຍເລີຍລົ້ມ ທ້າວຄໍ່ມີໄຟ ຟັນຖືກໃຫຼ່ຊ້າຍຂອງເຈົ້າຟ້າບາດນຶ່ງເຈົ້າຟ້າກໍລຸກຂຶ້ນຕໍ່ສູ້ ເຕະ ງ້າວຫລຸດຈາກມື ທ້າວຄໍ່ມີໄຟໄປ ແລະຕໍ່ສູ້ກັນດ້ວຍມືເປົ່າ ເຈົ້າຟ້າເຕະ ທ້າວຄໍ່ມີໄຟລົ້ມຫງາຍລົງ ເຈົ້າຟ້າຂຶ້ນຂີ່ແລະບີບຄໍທ້າວຄໍ່ມີໄຟງຈະຕາຍ ຈຶ່ງຮ້ອງຫມູ່ມາຊ່ວຍວ່າ ສູຈະປ່ອຍກູ ຕາຍບໍ ມາຊ່ວຍກູແດ່ແດ່ນ ພວກຄົນຢູ່ເຮືອອື່ນຢູ່ທາງນອກທີ່ ໄດ້ຍິນສຽງຮ້ອງ ກໍພາ ກັນແລ່ນທາງປະຕູ ເຈົ້າຟ້ານຶກວ່າແມ່ນຜູ້ຮ້າຍ ຈະມາຊ່ວຍກັນ ຈຶ່ງວາງຄໍທ້າວຄໍ່ ມີໄຟ ໂດດເຂົ້າໃປເອົາອາວຸທ ທີ່ຢູ່ໃນໂສ້ມ ເພື່ອຕໍ່ສູ້ກັບຜູ້ຮ້າຍ ທ້າວຄໍ່ມີໄຟ ຈຶ່ງ ໄດ້ລອດຕາຍ ແລະພາຫມູ່ແລ່ນຫນີໃປ ເຈົ້າຟ້າໄດ້ຍິງປືນຂຶ້ນ ໓ ນັດ ຂຸນທານໄດ້ຍິນ ສຽງປືນ ກໍພາກັນແລ່ນໃປທີ່ພວກຜູ້ຮ້າຍໄດ້ແລ່ນຫນີໃປກ່ອນຫມົດແລ້ວ ເຈົ້າຟ້າຮາຍ ໃຫ້ຂຸນທານ ແລະເອົາທະຫານພວກຖືກຍາມນັ້ນ ໃສ່ຄຸກຫມົດທັງນາຍຂຸນທານກໍຖືກ ໂທສ ແລະ ຖືກປົດ ເພາະນາຍແຕ່ງຍາມໃຫ້ຂຸນທານຍາມ ໃປເຖິງກໍ ເວລາ ໖ ໂມງຄ່ຳ ແຕ່ພວກຜູ້ຮ້າຍມາທັນກ່ອນ ໖ ໂມງ ເພາະເຂົາຮູ້ຈັກໂຄງການທະຫານ ຈະມານອນຍາມທີ່ນັ້ນ ຫຼັງຈາກນັ້ນ ພຣາຫຼວງຄຳລີ ຍັງໄດ້ຊັກຊວນ <u>ເອົາຜູ້ຮ້າຍ ຫຼາຍໆຄົນ ເຂົ້າມາຕີເມືອງສິງ</u> ແຕ່ວ່າເວລາຜູ້ຮ້າຍຈະເຂົ້າຕີນັ້ນ ເຈົ້າຟ້າຮູ້ກ່ອນ

ຈຶ່ງແຈ້ງໃຫ້ຝຣັ່ງຊາບເຫດການຜູ້ຮ້າຍຈະເຂົ້າຕີເມືອງສິງ ຝັ່ງຈຶ່ງຣີບ ຈັດທະຫານ ອອກຮົບ ທະຫານອອກຈາກວຽງ ໄປປະຫມານ ໓໐໐ ແມດ ເວລາ ໗ ໂມງຄ່ຳ ກໍໄດ້ປະທະກັບຜູ້ຮ້າຍ ຢູ່ທີ່ລ້ອງຢູ່ມ່ານ ຜູ້ຮ້າຍໄດ້ຍິງໃສ່ທະຫານກ່ອນ ທະຫານຈຶ່ງ ຍິງຜູ້ຮ້າຍ ຍິງກັນບໍ່ທັນໃດນາທີ ຜູ້ຮ້າຍກໍແຕກຫນີໄປຫມົດ ການເສັຽຫາຍຍິງກັນ ຫນາຝັ່ງຕາຍນຶ່ງຕົວຄົນຟ່າຍໃດບໍ່ຕາຍຈັກຄົນ ເຈົ້າຟ້າມີຄວາມຄຽດແຄ້ນທີ່ສຸດຈຶ່ງໄດ້ ແຕ່ງທະຫານຂອງພະອົງຄ໌ ອອກຕິດຕາມຫາບ່ອນຢູ່ ພຣາຫຼວງຄຳລືແລະສັງຫານພຣາ ຫຼວງຄຳລືເສັຽ ໃນປີ ຈ.ກ ໑໘໗໘ ຕືວ ຈ.ຕ ໑໒໐໒ ຈ.ກ ໑໘໗໘ ເມື່ອພຣາ ຫຼວງຄຳລືຕາຍແລ້ວ ໃຫມ່ດວງຄຳລູກຊາຍຂອງ ພຣາຫຼວງຄຳລື ກໍມີຄວາມຄຽດແຄ້ນ ຫວັງຈະຄິດແກ້ແຄ້ນແທນພໍ່ ຈຶ່ງຊອກຫາຜູ້ຮ້າຍ ຈະທຳການກະບົດສືບຕໍ່ພໍ່ ແຕ່ວ່າດ້ວຍ ສັບຂອງເຈົ້າຟ້າຮູ້ກ່ອນ ເຈົ້າຟ້າແຕ່ງຂຸນຫານ ອອກລອບໄປສັງຫານໃຫມ່ດວງຄຳ ແລະຕັດເອົາຫົວໃຫມ່ດວງຄຳ ໄປສຽບຫຼັກໄວ້ທີ່ນອກວຽງເມືອງສິງ ເພື່ອຖວາຍເຈົ້າ ຟ້າຊາບເຫັນ ເມື່ອປີ ຈ.ກ ໑໘໗໔ ຈ.ຕ ໑໒໑໑ ຈ.ກ ໑໘໙໔ ຝັ່ງໄດ້ເຫັນເຫດ ການຫົວຄົນນັ້ນ ຈຶ່ງຕິຕຽນເຈົ້າຟ້າວ່າ ເຈົ້າຟ້າບໍ່ດີຂ້າຄົນ ເປັນການຜິດກົດຫມາຍ ເຈົ້າຟ້າຕອບວ່າ ຂ້າສັດຕຣູກໍຍັງຜິດກົດຫມາຍຫຼື ຝັ່ງວ່າໃຫມ່ດວງຄຳຍັງບໍ່ທັນໄດ້ເປັນສັຕູ ເຈົ້າຟ້າ ຝຣັ່ງແລະເຈົ້າຟ້າກໍໂຕ້ຖຽງກັນ ຝັ່ງກວ່າວ່າບໍ່ຜິດ ແລະ ຂ້າຮອດລູກຫຼານ ນັ້ນ ເປັນການຜິດກົດຫມາຍຂອງຝຣັ່ງ

<u>ເຈົ້າຟ້າອົງຄຳ ຫນີຈາກເມືອງສິງ</u> ປີ ໑໒໑໓ ຈ.ກ ໑໘໗໓ ເຈົ້າຟ້າອົງຄຳ ມີລູກ ໓ ຄົນ ຜູ້ກົກຊື່ເຈົ້ານາງຈາມຄຳ ຜູ້ທີ ໒ ຊື່ ຈັນທິພ ປ່ຽນຊື່ເຈົ້ານາງວັນນາ ເປັນເມັຽເຈົ້າເມືອງຍອງ ຜູ້ປາຍຊື່ ເຈົ້າຫມ່ອມ ສວັນນະທົງຄຳ ມີເມັຽ ໕ ຄົນເທວີຊື່ ເຈົ້ານາງບົວຄຳ ຜູ້ທີ ໒ ຊື່ນາງແສງເອື້ອຍມີ ລູກຊື່ເຈົ້າຫມ່ອມ ສຸວັນນະທົງຄຳ ເມັຽທີ ໓ ຊື່ນາງແສງ ຜູ້ທີ ໔ ຊື່ນາງຂັນແກ້ວ ຜູ້ທີ ໕ ຊື່ນາງຄຳດາ ສ່ວນເທວີຜູ້ກ່ອນແມ່ເຈົ້ານາງຈອມຄຳ ແລະນາງວັນນານັ້ນ ຕາຍ ເຈົ້າເອົາເຈົ້ານາງບົວຄຳ ມາເປັນນາງເທວີໃຫມ່ ເທວີໃຫມ່ບໍ່ມີລູກ ນາງ ແສງ ນາງຂັນແກ້ວ ນາງຄຳດາບໍ່ມີລູກ

<u>ເຈົ້າຟ້າອົງຄຳ ມີໃຈຄຽດກັບຝຣັ່ງ</u> ດ້ວຍຄວາມໂຕ້ຖຽງກັນ ນຳຂ້າໃຫມ່ ດວງຄຳ ລູກພຣາຫຼວງຄຳລືນັ້ນ ເຈົ້າຟ້າມີໃຈຄຽດຢູ່ແລ້ວ ຊ້ຳໄດ້ຟັງຄວາມໂຕະໂຍະ <u>ຂອງເຈົ້າຫຼວງແສນ</u> ຜູ້ທີ່ໄດ້ມາເປັນ ນ້ອງເຂີຍ ຍາດຂອງເຈົ້າຟ້າ ວ່າ ຝັ່ງເສັດມີ

ບ້ານເມືອງປະເທັສຂອງເຂົາ ກໍຖືກຍຸທຣະມັນ ເອົາໝົດແລ້ວ ຝ່ງເວລານີ້ແຕ່ ຄ້າງຢູ່ ຫົວເມືອງທາງເໜືອນີ້ ບໍ່ເຫັນໃດຄົນເທົ່ານັ້ນ ເຂົາຈະຂຶ້ນມາຕີກໍບໍ່ໃດ້ ແລ້ວ ດັ່ງນັ້ນເຈົ້າຟ້າ ຈຶ່ງຄິດກະບົດຕໍ່ຝ່ງ ໃດ້ຈັດເອົາຄົນຮ້າຍຄົນຫານ ທັງໝົດ ໔໐ ຄົນ ພຍາຫານສົງຄາມຢູ່ເມືອງຍູ້ ກໍຖືກເຈົ້າຟ້າຈັດເອົາມາ ຝ່ງຮູ້ຄວາມ ຣະຫັດຂອງເຈົ້າຟ້າ ທັງໃດ້ເຫັນຂຸນຫານ ຢູ່ຕົ້ນທໍ່ເຈົ້າຟ້າ ຝ່ງຈຶ່ງຖາມເຈົ້າຟ້າ ວ່າ ເຈົ້າຟ້າເອົາຄົນມາສັງຫານ ຈະເອົາມາເຮັດເສິກກັບຝ່ງບໍ ຝ່ງບໍ່ຢ້ານ ຝ່ງ ມີທະຫານ ເວົ້າແລ້ວຝຣັ່ງກໍລົງຈາກທໍ່ກັບໄປຄ້າຍ ເຈົ້າຟ້າຝ່ງ ຈະເອົາທະຫານ ມາຈັບ ຈຶ່ງເອົາຄອບຄົວ ລູກເມັຍ ທ້າວແກ້ວຂຸນຫານໜີອອກຈາກທໍ່ຄຳທັນທີ ເວລາ ໕ ໂມງເຊົ້າ ວັນເດືອນຈຽບລົງ ໒ ຄ່ຳ ປີ ຈ.ກ ໑໒໗໕ ກ.ຕ ໑໙໑໓ ເຈົ້າຟ້າອອກຈາກເມືອງສິງ ໄປທາງເມືອງມອມ ກາຍສາຍແດນເມືອງສິງໄປເຖິງ ບ້ານຫ້ວຍແຈ່ ກໍເອົາກັນຕັ້ງຕຳໜັກທໍໃຊຍຢູ່ທີ່ນັ້ນ ເສນາອາມາດ ທ້າວຂຸນຜູ້ໃຫຍ່ ພວກຕິດຕາມເຈົ້າຟ້າໄປເວລານັ້ນມີ ເຈົ້າອຸປະຣາຊຣາຊສານ ເຈົ້າຣາຊບຸດ ສິງ ຫາ ຣາຊວົງກັນທະ ພຍາຫຼວງກັນທະວະດີ ພຍາຫຼວງແອ່ນຄຳ ພຍາຫຼວງອິນຕະ ນອກນັ້ນຍັງມີ ຂຸນພຍາ ຂຸນຊ້າ ຂຸນແສນ ໝື່ນທ້າວແກ້ວຂຸນຫານ ມະຫາເລກດັກ ຊາຍ ນ້ຍໃຫ່ຍຍິງຊາຍ ຣວມທັງໝົດ ໒໔໐ ຄົນ ເຈົ້າຟ້າຈຶ່ງແຕ່ງຄົນ ຖືຈົດໝາຍ ໄປຫາເຈົ້າຟ້າຊຽງຕຸງ ວ່າເຈົ້າຟ້າອົງຄຳ ຈະໄປເພິ່ງ ແລະທັງຂາຍຊ້າງພູ້ບານ ໑ ຕົວໃຫ້ເຈົ້າຟ້າຊຽງຕຸງ ໃດ້ເງິນສອງເທິງຫ້ສປາກ ສອງພັນຫ້າຮ້ຍ ເງິນກັບ ເກົ່າ ສ່ວນເຈົ້າຫຼວງແລມກໍຕິດຕາມເຈົ້າຟ້າໄປ.

<u>ສ່ວນເຈົ້າຫໍ້ ຢູ່ທີ່ຊຽງຮຸ່ງຊາບວ່າ</u> ເຈົ້າຟ້າເມືອງສິງ ເຂົ້າໄປຢູ່ຫ້ວຍແຈ່ ກໍແຕ່ງຈົດໝາຍມາເຊີນ ເຈົ້າຟ້າຂຶ້ນໄປຊຽງຮຸ່ງ ເຈົ້າຟ້າພັກຢູ່ຫ້ວຍແຈ່ ມີ ເດືອນ ຈຶ່ງຂຶ້ນໄປເມືອງລ້າ ຕັ້ງຕຳໜັກທໍໃຊຢູ່ພຽງບ້ານຊາຍເມືອງລ້າ ໃດ້ຫົກເດືອນ ເຈົ້າ ຫໍ້ກໍຮຽກເຈົ້າຟ້າໃຫ້ຂຶ້ນໄປຊຽງຮຸ່ງ ເຈົ້າຟ້າຈຶ່ງໃດ້ຂຶ້ນໄປຊຽງຮຸ່ງ ຄົນທັງຫຼາຍແລະ ທ້າວຂຸນຜູ້ນ້ຍ ທີ່ໃດ້ຕິດຕາມເຈົ້າຟ້າ ກໍໃດ້ພາກັນລັກໜີກັບຄືນບ້ານໜີແຕ່ຢູ່ຫ້ວຍແຈ່ ແລະເມືອງລ້າກໍມີ ທ້າວຂຸນຜູ້ໃຫຍ່ ທີ່ກັບເຈົ້າຟ້າໄປເຖິງຊຽງຮຸ່ງມີ ເຈົ້າອຸປະຣາຊ ວັງສານ ເຈົ້າຣາຊບຸດສິງຫາ ພຍາຫຼວງກັນທະວະດີ ສ່ວນເຈົ້າຣາຊວົງກັນທະ ແລະ ພຍາຫຼວງແອ່ນຄຳພຍາເຂື່ອນຄຳລື ຈາສູຣະວົງ ຈາບົວຣະວົງ ໄປນຳເຈົ້າຟ້າເຖິງ ເມືອງລ້າ ແລ້ວກໍກັບຄືນ ເມືອງສິງ <u>ເຈົ້າຟ້າໄປຢູ່ຊຽງຮຸ່ງ</u> ນານໃດ້ ໑໐ ປີ ກໍເລີຍ

ສິ້ນພະຊົນ ເມື່ອພະຊົນອາຍຸໄດ້ ໕໗ ປີ ດ້ວຍເປັນຕຸ່ມຝີອອກທົ່ງອົ່ນ ຄັນເຈົ້າຟ້າ ອິງຄຳສິ້ນພະຊົນແລ້ວ ພວກນາງເມັຍຄື: ເຈົ້ານາງບົວຄຳ ນາງແສງເອີຍ ນາງ ຍັກແກ້ວ ນາງຄຳດາ ພອມບຸດທຸກຄົນ ກໍໄດ້ພາກັນກັບຄືນມາເມືອງສິງ ໄດ້ລູກຄົນ ນຶ່ງ ຊື່ວ່າເຈົ້າໃຊ (ຕາຍແລ້ວ)

ຫຼັງຈາກ ເຈົ້າຟ້າອິງຄຳ ໜີຈາກເມືອງສິງໄປແລ້ວເມືອງສິງບໍ່ມີເຈົ້າຟ້າ ອີກ ພໍແຕ່ເປັນເມືອງຂຶ້ນທັມມະດາ ເໝືອນດັ່ງເມືອງອື່ນໆ ໃນປະເທສລາວ.

<u>ທາງຣາຊການ ຈຶ່ງໄດ້ສົ່ງໃຫ້ ເຈົ້ານາຍຣາຊການ</u> ຝ່າຍນະຄອນ ຫຼວງພຣະບາງ ຂຶ້ນເມືອເປັນເຈົ້າເມືອງສິງ ຕໍ່ໆມາ.

ຕັ້ງແຕ່ປີ ໑໙໑໓ ຈຸລະສັກຣາຊ ໑໒໗໖ ຕໍ່ສືບກັບມາທີ່ໄດ້ເປັນເຈົ້າເມືອງສິງ ສືບກັນຕໍ່ໆມາ ຄື: ໄດ້ຕັ້ງໃຫ້.

| | | | | |
|---|---|---|---|---|
| ໑. | ເຈົ້າພົມມາ | ເປັນເຈົ້າເມືອງສິງ | ແຕ່ປີ | ໑໙໑໓ |
| ໒. | ພຍາພົມລີ ຄືນເມືອງສິງ | " | " | ໑໙໑໔ |
| ໓. | ທ້າວບຸນປັນ | " | " | ໑໙໑໙ |
| ໔. | ທ້າວ ສູນທອນ | " | " | ໑໙໒໔ |
| ໕. | ທ້າວ ເພົ້າປັນຍາ | " | " | ໑໙໒໘ |
| ໖. | ເຈົ້າຣາຊວົງກັນທະວົງ ຄືນເມືອງສິງ | " | " | ໑໙໓໐ |
| ໗. | ທິຕຕັ້ | " | " | ໑໙໓໑ |
| ໘. | ທ້າວທ້າວຄຳໃພ | " | " | ໑໙໓໒ |
| ໙. | ທິດຄຳດີ | " | " | ໑໙໓໔ |
| ໑໐. | ເຈົ້າສີສວັດ | " | " | ໑໙໓໕ |
| ໑໑. | ທ້າວຄຳອ້ວນ | " | " | ໑໙໓໗ |
| ໑໒. | ສູນທອນ | " | " | ໑໙໔໓ |
| ໑໓. | ໃໝ່ດວງຄຳ ຄືນເມືອງສິງ | " | " | ໑໙໔໕ |
| ໑໔. | ວັນດີ | " | " | ໑໙໓໘ |
| ໑໕. | ໝານອູ ຫຕັ້ງ | " | " | ໑໙໔໕ |
| ໑໖. | ເຈົ້າໃໝ່ຍາວົງ ຄືນເມືອງສິງ | " | " | ໑໙໔໕ |
| ໑໗. | ໃໝ່ດວງຄຳ ຄືນເມືອງສິງ | " | " | ໑໙໔໖ |

| | | | | |
|---|---|---|---|---|
| ຄຳສຸກສັວສດ໌ | | ເປັນເຈົ້າເມືອງສິງ | ປີ | ໑໙໔໗ |
| ໃຫມດວງຄຳ | ຄົນເມືອງສິງ | " | " | ໑໙໔໘ |
| ຄຳສຸກສາວັສດີ | | " | " | ໑໙໕໐ |
| ສີສຸພັນພູມປດິດ໌ | | " | " | ໑໙໕໓ |
| ຜູສູນທອນ | | " | " | ໑໙໕໕ |
| ທາວບົວເທັດ | | " | " | ໑໙໕໗ |
| ຈັນເພັງມະນີຄົງ | | " | " | ໑໙໖໐ |
| ສຸກສີຣວິໃຊ | | " | " | ໑໙໖໖ |

<u>ເມືອງສິງຖືກ ແນວລາວຮັກຊາຕ ຍຶດະເອົາ</u> ປີ ໑໙໖໔ ເມື່ອວັນທີ ໔ ເດືອນ ແມ ໑໙໖໔ ເດືອນ ຝ ລົ້ ໕ ລາວດັບ ວລາ ໘ ໂມງເຊົ້າ ແນວລາວປະສົມວຽດນາມເໜືອ ນຶ່ງກອງພັນ ແລະທະຫານຈີນ ໔ ກອງພັນຫມູນຫົວເຂົ້າຕີເອົາເມືອງສິງ ຕີກັນນຶ່ງໃດ້ໃດ້ ເມືອງສິງກໍແຕກ ພວກແນວລາວ ພ້ອມທະຫານວຽດນາມເໜືອຍຶດເອົາເມືອງສິງ ໃນວຽງແລະເດີ່ນຍົນໃດ້ໃວ້ຫມົດ.

ສ່ວນຣາຊການທີ່ຢູ່ເມືອງສິງວລາແນວລາວເຂົ້າຕີນັ້ນມີ.

- ຝ່າຍທະຫານ <u>ຣ້ຽໂທລາກີ</u> ເປັນຜູ້ບັງຄັບມີທະຫານ ໔໕ ຄົນ.
- ຝ່າຍຕຳຣວຈ <u>ຈ່າເອັກ ອິນເຖີງ ພູກຄຳແກ້ວ</u> ເປັນຜູ້ບັງຄັບມີນາຍແລະພົລຕຳຣວຈ ບໍເຖີງ ໑໐ ຄົນນອກນີ້ ຍັງມີ<u>ເຈົ້າຊູເຊັງ</u> ເປັນທະຫານແຕກຂອງສັງກະເຈັກມີລູກນ້ອງບໍເຖີງ ໑໐ ຄົນ ທັງ ໓ ຝ່າຍຕໍ່ສູ້ກັບແນວລາວແລະວຽດນາມເໜືອບໍໃດ້ພາກັນ ແຕກຫນີອອກໃປທາງບ້ານຂວາງແລະພັກຢູ່ບ້ານຫນອງເງິນນຶ່ງຄືນ.

ຝ່າຍປົກຄອງ <u>ຈັນເພັງມະນີຄົງ</u> ເປັນເຈົ້າເມືອງໃຫມ່ວົງຄຳ ສູວັນະນໍຣາຊ ເປັນນາຍກອງ ຫນານໃຊວົງມູນີວົງເປັນນາຍກອງ ທ້າວເມັດວົງໃຊ ເປັນສມຽນ

ຝ່າຍຄຣູ ເປັນຫົວໜ້າຫມວດ ແລະ ຄຣູກໍໃດ້ພາກັນແຕກຫນີໃປທາງເມືອງມົ່ງ ສ່ວນທາວເມັດວົງໃຊຖືກທະຫານວຽດນາມເໜືອຈັບຕົວແລະນາຍກອງໃຫມ່ວົງຄຳສູວັນະນໍຣາຊກໍແຕກຫນີທາງບ້ານທ່າປ້າວ ບໍທັນໃດ້ອອກເມືອງສິງ ຂ້າຣາຊການທັງສອງຄົນນີ້ ໃຫ້ຄ້າງຢູ່ ເມືອງສິງ ເຖີງປີ ໑໙໖໔ ຈິ່ງໃດ້ພາກັນ ລັກຫນີອອກ

ພວກແນວລາວ ແລະທະຫານວຽດນາມເໜືອ ຕີເອົາເມືອງສິງແລ້ວ ຍັງ

ມາຕົ້ນນ້ຳທາງ ແຕກວັນທີ ຜີ ແມ ໑໙໖໔ .

<u>ເຈົ້າແຂວງຂ້າຣາຊການແຂວງ ຂ້າຣາຊການທີ່</u> ຢູ່ນ້ຳທາແລະເມືອງສິງ ກໍພາກັນແຕກ ຫນີມາເຖິງເມືອງຫ້ວຍຊາຍ ນຳກັນມີສເດັຈ ເຈົ້າບໍວອນວັທະນາ ອົງເປັນເຈົ້າແຂວງນຳທາກໍພາກັນ ຕັ້ງແຂວງ ຢູ່ທີ່ເມືອງຫ້ວຍຊາຍ ຊື່ແຂວງຫົວຂອງແລະຕັ້ງໂຮງການເມືອງນ້ຳທາ ເມືອງສິງ ຢູ່ທີ່ເມືອງຫ້ວຍຊາຍ ມີຂ້າຣາຊການ ຄົບຖ້ວນບໍຣິຫານແຜ່ນດິນ ແຕ່ປີ ໑໙໖໔ ຕໍ່ມາຂ້າຣາຊການເມືອງສິງມີ ດວງຄຳມູນີວົງ. ອົງຄຳ ໃຊວົງ

ສ່ວນປະຊາຊົນ ເມືອງສິງ ແລະ ນ້ຳທາ ກໍໃດ້ພາກັນອົພະຍົບຄອບຄົວ ລັກຫນີອອກມາ ຢູ່ນຳເຈົ້ານາຍຂອງຕົນທີ່ຫ້ວຍຊາຍມາຫລາຍ ຂຶ້ນເລື້ຍ ເກີບເມືອງສິງ ນ້ຳທາ ຈະຮ່າງແລ້ວ.

ເຈົ້າເມືອງພວກອົພະຍົບຈາກນ້ຳທາເມືອງສິງ ແຕຕົ້ນເມືອງສິງ ແມ່ນຈັນເພັງມະນີຄົງ ປີ ໑໙໖໔ ສູກສຣີວິໄຊຍ ໑໙໖໖.

ຣາສດອນເມືອງສິງ ທີ່ໃດ້ອົພະຍົບຈາກເມືອງສິງມາເຖິງເມືອງຫ້ວຍຊາຍ ນັບແຕ່ປີ ໑໙໖໔ ເປັນຕົ້ນມາໃດ້ມາຕັ້ງບ້ານຢູ່ທີ່ເມືອງຫ້ວຍຊາຍ ເປັນຕົ້ນທີ່ບ້ານນ້ຳຍອນ ບ້ານນ້ຳເກີງໃຫມ່ ບ້ານໃຫມ່ສີ່ງຄຳ ບ້ານກຍແດງ ບ້ານຫ້ວຍເຜິ້ງ ບ້ານຫ້ວຍຮື້ ພວກນຶ່ງມາຕັ້ງບ້ານຢູ່ ນ້ຳຕູຍ ນ້ຳຢູ ພວກມາຕັ້ງຢູ່ທີ່ເມືອງ ເມືອງມີ ບ້ານເມືອງມັງ ເມືອງກາງ ເມືອງລອງ ຊຽງກົກ ແລະ ບ້ານເມືອງສິງ ເມືອງສະມາຕັ້ງຢູ່ ຫ້ວຍສ້ານ ພວກມາຢູ່ກັບເມືອງຫ້ວຍຊາຍ ຊື່ບ້ານຕາກແດດ ພວກນຶ່ງລຽງໄປເຖິງຫລວງພະບາງ ຕັ້ງຢູ່ຊື່ວາ ບ້ານປ່າອ້ຍ ບ້ານຫົວຂົວນ້ຳຄານ.
ພວກທີ່ລຽງໄປຢູ່ວຽງຈັນ ກໍຫລາຍຄອບຄົວ ພວກທີ່ລຽງໄປຢູ່ເມືອງໂພນໂຮງກໍມີ

<u>ຮວບຮວມປະຫວັດ</u> ຊຽງແຂວງ ເມືອງສິງ

ເຈົ້າຟ້າເຫຼັກນ້ຍ ເປັນລູກເຈົ້າແຜ່ນດິນຊຽງຮຸ່ງ
ຖືກສິ່ງໃຫ້ແພ່ລອງນ້ຳຂອງມາແຕ່ຊຽງຮຸ່ງ
ໃດ້ມາຕັ້ງເປັນຊື່ເມືອງຊຽງແຂວງ
ໃດ້ເອົານາງຫ້ຍມກົ້ນ ລູກສາວຂອງພຍາມີໂມ ເປັນເມັຍ
ໃດ້ລູກຊາຍ ໑ ຄົນ ຊື່ເຈົ້າອ້າຍຫນໍ່ເມືອງ
ເຈົ້າອ້າຍຫນໍ່ເມືອງ ມີລູກຊາຍ ໑ ຄົນຊື່ ເຈົ້າສູດອົກ.
ເຈົ້າສູດອົກ ໃດ້ລູກ ໔ ຊາຍ ຜູ້ກົກຊື່ ເຈົ້າຄຳສູກ ຜູ້ທີສອງຊື່ເຈົ້າສູຣິນທາ ສ່ວນ

ເຈົ້າຄຳສຸກບໍມີລູກ

- ເຈົ້າສຸຣິນທາ ໄດ້ລູກ ໖ ຊາຍ ຄື:
    ໑. ເຈົ້າຍອດໃຈແພງ ເປັນເຈົ້າຟ້າຊຽງແຂງ ຊື່ເຈົ້າສອງເມືອງ
    ໒. " ແສງສີ
    ໓. " ຕ່ອມຄຳແດງ ເປັນເຈົ້າຟ້າຊຽງແຂງ ຊື່ພຣາຊາຍ
    ໔. " ອິນແປງ ເປັນເຈົ້າຟ້າຊຽງແຂງ
    ໕. " ບູນແຝງ
    ໖. " ບູນແພງ
- ເຈົ້າສຸຣິນທາ ໄດ້ໄປເປັນ ເຈົ້າເມືອງຊຽງແສນ ຫມົດບູນຢູ່ທີ່ນັ້ນ
- ເຈົ້າຟ້າເຫຼັກນ້ອຍ ເປັນເຈົ້າຟ້າຊຽງແຂງ
- ເຈົ້າອ້າຍຫນໍ່ເມືອງ ເປັນ " ແທນພໍ່
- ເຈົ້າສຸດອົກ ລູກເຈົ້າຫນໍ່ເມືອງ " "
- ເຈົ້າຄຳສຸກ ລູກເຈົ້າສຸດອົກ " "
- ເຈົ້າຍອດໃຈແພງ " "
- ເຈົ້າຕ່ອມຄຳແດງ " ພຣາຊາຍ.

ໄດ້ລູກ ໓ ຄົນ ຜູ້ກົກຊື່<u>ເຈົ້າຫນໍ່ແກ້ວ</u> ຜູ້ກາງຊື່ <u>ນາງຄຳແດງ</u> ຜູ້ທີ ໓ ຊື່ <u>ເຈົ້າຫນໍ່ຄຳ</u>

- ເຈົ້າອິນແປງ ເປັນເຈົ້າຟ້າຊຽງແຂງ
- ເຈົ້າແສງສີ ແລະ ແມ່ຜູ້ເປັນ ນາງຫມ້າຍຂອງເຈົ້າສຸຣິນທາພາເອົາຄົນ ມາຕັ້ງເມືອງສິງ ຄັ້ງທີ ໑ ຊຽງຕູງ ແລະໃຫຍ ສົງຄືນມາເປັນເຈົ້າຊຽງແຂງ.
- ເຈົ້າຊຽງຕູງ ນາງເມືອງກາ ມາເປັນເຈົ້າຊຽງແຂງ ໃພ່ບໍມັກ
- ເຈົ້າໃຫ ເອກະມຸນຕີໃຊຍສົງຄາມ " "
- ເຈົ້າໃຫ ເຈົ້າເຂມະຣາຊ " "

ຄົນໃພ່ພົລະເມືອງບໍມັກ ບໍພໍໃຈ ເປັນເຈົ້າກໍບໍໄດ້ນານ.

- ເຈົ້າຫນໍ່ແກ້ວ ລູກຂອງ ເຈົ້າຕ່ອມຄຳແດງ ພຣາຊາຍ ທີ່ເຈົ້າອິນແປງ ສົ່ງໄປຢູ່ເມືອງຍູ້ຄາວເຈົ້າອິນແປງ ເປັນເຈົ້າຟ້າຊຽງແຂງນັ້ນ ໃດມາເປັນເຈົ້າຟ້າຊຽງແຂງ.
- ເຈົ້າຫນໍ່ຄຳ ລູກຂອງເຈົ້າຕ່ອມຄຳແດງພຣາຊາຍ ໄດ້ເອົາຄົນມາຕັ້ງເມືອງສິງ

ຄັ້ງທີ ໒. ແລະ ເປັນເຈົ້າຟ້າເມືອງສິງ ພຼະນາມວ່າເປຈົ້ງກູລ ແປວ່າສຣີໜໍ່ ຈື່ງຮຽກພຼະນາມວ່າ ເຈົ້າຟ້າສຣີໜໍ່ ໄດ້ບຸຕທິດາ ໔ ຄົນ

ຄື ໑ ເຈົ້ານາງສຸມັນທາ
໒ ເຈົ້າໜ່ອມອີງຄຳ
໓ ເຈົ້ານາງປະທູມມາ ເປັນເທວີ ເຈົ້າຟ້າຊຽງຕູງ
໔ ເຈົ້າໜ່ອມທິພະມະນີຄຳ

- ເຈົ້າໜ່ອມອີງຄຳ ໄດ້ເປັນເຈົ້າຟ້າ ເມືອງສິງ ແທນພໍ
- ເຈົ້າຟ້າອີງຄຳ ໜີຈາກ ເມືອງສິງ ປີ ຈ.ກ ໑໒໗໖ ກ.ຕ ໑໙໑໓ ຄົນເຈົ້າຟ້າຢອີງຄຳ ໜີຈາກເມືອງສິງແລ້ວ ເມືອງສິງບໍ່ມີເຈົ້າຟ້າອີກ ຣາຊການຈັດຄົນເປັນເຈົ້າເມືອງສິງເຖິງປີ ໑໙໗໑ ມີ໒໕ ຄົນແລ້ວ
- ທາງຣາຊການໄດ້ຕັ້ງຄົນໄປປ່ຽນກັນເປັນເຈົ້າເມືອງສິງ ດັ່ງມີລາຍຊື່ຕໍ່ລົງໄປ ນີ້:

| | | |
|---|---|---|
| ໑. ເຈົ້າພົມາ | ເປັນເຈົ້າເມືອງສິງ ແຕ່ປີ | ໑໙໑໓ |
| ໒. ພຍາພົມລື ຄົນເມືອງສິງ | " | ໑໙໑໔ |
| ໓. ທ້າວບຸນປັນ | " | ໑໙໑໙ |
| ໔. ທ້າວສູນທອນ | " | ໑໙໒໔ |
| ໕. ເພົ້າປັນຍາ | " | ໑໙໒໘ |
| ໖. ເຈົ້າຣາຊວົງ ກັນທະວົງ ຄົນເມືອງສິງ | " | ໑໙໓໐ |
| ໗. ທິຕຕ໊ | " | ໑໙໓໑ |
| ໘. ທ້າວຄຳໃພ | " | ໑໙໓໒ |
| ໙. ທິດຄຳດີ | " | ໑໙໓໔ |
| ໑໐. ເຈົ້າສີສົວສ໌ດ | " | ໑໙໓໔ |
| ໑໑. ທ້າວຄຳອ້ວນ | " | ໑໙໓໗ |
| ໑໒. ວັນດີ | " | ໑໙໓໘ |
| ໑໓. ສູນທອນປັຖມະວົງ | " | ໑໙໔໖ |
| ໑໔. ໃຫມ່ດວງຄຳມູນີວົງ ຄົນເມືອງສິງ | " | ໑໙໔໕ |
| ໑໕. ໜານອູ ຫ໋ຕັ້ງ | " | ໑໙໔໕ |

| | | | |
|---|---|---|---|
| ໑໖. | ເຈົ້ອໃຫມ່ຍາວົງ ຄືນເມືອງ | " | ໑໙໔໕ |
| ໑໗. | ໃຫມ່ດວງຄຳມູນີວົງ " | " | ໑໙໔໖ |
| ໑໘. | ຄຳສຸກສວັສດີ | " | ໑໙໔໗ |
| ໑໙. | ໃຫມດວງຄຳມູນີວົງ ຄືນເມືອງສິງ | " | ໑໙໔໘ |
| ໒໐. | ຄຳສຸກສັວດີ | " | ໑໙໕໐ |
| ໒໑. | ສີສຸພັນພູມປດິຕ | " | ໑໙໕໓ |
| ໒໒. | ພູສີນທອນ | " | ໑໙໕໕ |
| ໒໓. | ທ້າວບົວເຫັດ | " | ໑໙໕໗ |
| ໒໔. | ຈັນເພັງ ມະນີຄົງ | " | ໑໙໖໐ |
| ໒໕. | ສຸກສີຣສີໃຊ | " | ໑໙໖໖ |

ເມືອງສິງ ຖືກແນວລາວຮັກຊາຕ ຍຶດຄອງມາເມື່ອ ປີ ໑໙໖໒ ວັນທີ ໒ ແມ ເປັນຕົ້ນມາ ຣາຊການແຂວງນ້ຳທາເຈົ້າເມືອງສິງ ນ້ຳທາ ຂ້າຣາຊການ ທັງຫມົດ ໄດ້ອົບພະຍົບ ມາຕັ້ງໂຮງການແຂວງ ໂຮງການເມືອງງນ້ຳທາ ເມືອງ ສິງ ຢູ່ທີ່ເມືອງຫ້ວຍຊາຍ ເມືອປີ ໑໙໖໒-໖໓ ຕໍ່ມາ.

<u>ເທວະດາພີ່ເມືອງຊຽງແຂວງຊີ່ດ່ງຕ່ລົງ</u>

໑. ເຈົ້າເຊື້ອເມືອງຫລວງ
໒. ເຈົ້າຊ້າງເຜືອກ
໓. ເຈົ້າຊ້າງແດງ
໔. ເຈົ້າຊຽງນອກ
໕. ເຈົ້າຊຽງໃນ
໖. ເຈົ້າຄຳເມັດ
໗. ເຈົ້າພຣະຍາຫານ
໘. ນາງພຍາຫານ
໙. ນາງກຳເດື່ອງ
໑໐. ຈອມໃຈເຫລັກ

ນອກຈາກນັ້ທີ່ ບໍ່ຮູ້ ຮອດ ກໍຍັງມີ

ຊື່ເທວະດາຜີເມືອງສິງດົ່ງຕໍ່ລົງ

໑. ເຈົ້າຟ້າຫລວງ ຢູ່ດອນເຣືອ

໒. ເຈົ້າຟ້າຫມວກຄຳສາມຫ້າຍ ຢູ່ດອນເຣືອ

໓. ເຈົ້າຟ້າເລືອນ

໔. ເຈົ້າຟ້າດົງ ຢູ່ດົງເມົາ

໕. ເຈົ້າພຍາແຫ້ວ ຢູ່ຫົວຫ້ວຍຄອກ

໖. ພຍາຫລວງຫ້ານເສບກົນ ເລື້ອບໍ່ແລ່ນ

໗. ເຈົ້າອິນ ຢູ່ດົງເສືອ

໘. ເຈົ້າຟ້າຫລວງໂກຕາ ຢູ່ເມືອງຫົນ

໙. ເຈົ້າແຮນຄຳ ຢູ່ຫ້ວຍຫລວງ

໑໐. ເຈົ້າພຍາມ້ຽງເມືອງ ຢູ່ຕົ້ນດອນເຣືອ

໑໑. ພຍາປາດ

໑໒. ພຍາແກ້ວກາຍຄຳ

໑໓. ພຍາຫລວງອັນທະສີມາ ຢູ່ປາກບ່ອງ

໑໔. ເຈົ້າອິນແກ້ວ

໑໕. ນາງຜົມ ຂຽວຢູ່ຫົວນ້ຳຫ້ວຍ

໑໖. ນາງຍອດເມົາ ຢູ່ດົງເມົາ

໑໗. ນາງອຸ່ນເອື້ອຍ

໑໘. ນາງປຸກຢູ່ ລວງນ້ຳດ້າຍ

໑໙. ເຈົ້າຄຳລັນ ຢູ່ວັງຮັກ

໒໐. ນາງຄຳຄ້ອນ ຢູ່ວັງຮັກ

໒໑. ພຍາຫັນໃຫ້ ຢູ່ທາດຊຽງເທິ່ງ

໒໒. ພຍາແກນສີລາ ຢູ່

໒໓. ທີ່ຈຳບໍ່ໄດ້ກໍຍັງມີ ຜີເມືອງສິງທັງໝົດມີ ໓໒ ຄົນ